ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************************

ສຳນັກງານນາຍົກລັດຖະມົນຕີ

ເລກທີ 25 /ນຍ

ນະຄອນຫລວງວຽງຈັນ, ວັນທີ 14.02.2008

# ດຳລັດ
# ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍງົບປະມານແຫ່ງລັດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 02/ສພຊ., ລົງວັນທີ 06/05/2003;
- ອີງຕາມ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ., ລົງວັນທີ 26 ທັນວາ 2006;
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 330/ກງ, ລົງວັນທີ 11/02/2008.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ວາງອອກເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍງົບປະມານແຫ່ງລັດ ເພື່ອໃຫ້ມີຄວາມເປັນເອກະພາບ ແລະ ມີປະສິດທິຜົນສູງໃນຂອບເຂດທົ່ວປະເທດ.

**ມາດຕາ 2. ອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້ :

1. **ຫົວໜ່ວຍງົບປະມານ** ຕາມທີ່ລະບຸໄວ້ໃນ ຂໍ້ 3 ມາດຕາ 3 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ໝາຍເຖິງ ການຈັດຕັ້ງການເງິນຂອງອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ທີ່ໄດ້ຮັບມອບສິດຈາກລັດຖະບານ ໃນການສ້າງແຜນ, ການຈັດຕັ້ງປະຕິບັດ ແລະ ການສະຫລຸບງົບປະມານແຫ່ງລັດ;

2. **ທົວໜ່ວຍງົບປະມານຂັ້ນໜຶ່ງ** ໝາຍເຖິງ ການຈັດຕັ້ງການເງິນ ຂອງບັນດາອົງການ, ຂະແໜງການຂັ້ນສູນກາງ ຫລື ການຈັດຕັ້ງການເງິນ ຂອງພະແນກການຢູ່ຂັ້ນແຂວງ, ນະຄອນຫລວງ ປະຕິບັດໜ້າທີ່ເກັບລາຍຮັບ ແລະ ລາຍຈ່າຍງົບປະມານ ຕາມການມອບໝາຍຂອງຜູ້ສັ່ງການ;
3. **ທົວໜ່ວຍງົບປະມານຂັ້ນສອງ** ໝາຍເຖິງ ການຈັດຕັ້ງການເງິນ ແລະອົງການຈັດຕັ້ງອື່ນໆ ທີ່ຂຶ້ນກັບທົວໜ່ວຍງົບປະມານຂັ້ນ ໜຶ່ງປະຕິບັດໜ້າທີ່ເກັບລາຍຮັບ ແລະລາຍຈ່າຍງົບປະມານ ຕາມການມອບໝາຍຂອງທົວໜ່ວຍ ງົບປະມານຂັ້ນໜຶ່ງ;
4. **ເງິນຕາຕ່າງປະເທດ** ໝາຍເຖິງ ເງິນຕາຕ່າງປະເທດຂອງງົບປະມານແຫ່ງລັດ ທີ່ຄັງເງິນແຫ່ງຊາດເປີດບັນຊີເງິນຝາກໄວ້ຢູ່ໃນລະບົບທະນາຄານ;
5. **ກົດໝາຍວ່າດ້ວຍງົບປະມານແຫ່ງລັດ** ທີ່ໄດ້ກ່າວເຖິງຢູ່ໃນມາດຕາຕ່າງໆ ຂອງດຳລັດສະບັບນີ້ ແມ່ນໝາຍເຖິງ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບປັບປຸງ ເລກທີ 02/ສພຊ, ລົງວັນທີ 26 ທັນວາ 2006.

ສຳລັບຄວາມໝາຍຂອງຄຳສັບສະເພາະອື່ນໆ ໄດ້ກຳນົດໄວ້ໃນມາດຕາ 3 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດແລ້ວ.

**ມາດຕາ 3 . ລາຍຮັບງົບປະມານແຫ່ງລັດ**

ລາຍຮັບງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 15, 16 ແລະ 17 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ປະກອບມີລາຍລະອຽດ ດັ່ງນີ້ :

1. ລາຍຮັບ ຈາກພາສີ ແລະ ສ່ວຍສາອາກອນ
    - 1.1. ພາສີຂາເຂົ້າ-ຂາອອກ
    - 1.2. ສ່ວຍສາອາກອນ
        - 1.2.1. ສ່ວຍສາອາກອນທາງກົງ
            - ອາກອນກຳໄລ;
            - ອາກອນລາຍໄດ້;
            - ຄ່າທຳນຽມທະບຽນອາກອນ (ປະຕັງ);
            - ອາກອນຕ່ຳສຸດ;
            - ພາສີທີ່ດິນ.
        - 1.2.2. ສ່ວຍສາອາກອນທາງອ້ອມ
            - ອາກອນຕົວເລກທຸລະກິດ ຫລື ອາກອນມູນຄ່າເພີ່ມ;
            - ອາກອນຊົມໃຊ້.
    - 1.3. ຄ່າຈົດທະບຽນ ແລະຄ່າທຳນຽມຕ່າງໆ
        - ຄ່າຈົດທະບຽນເອກະສານ;
        - ຄ່າທຳນຽມຕ່າງໆ;

- ອາກອນສະແຕມ;
- ການໃຊ້ເສັ້ນທາງຄົມມະນາຄົມ;
- ຄ່າທຳນຽມວິຊາ;
- ຄ່າທຳນຽມອື່ນໆ.

2. ລາຍຮັບທີ່ບໍ່ແມ່ນພາສີອາກອນ

2.1. ລາຍຮັບຈາກຊັບສິນ ແລະ ຄ່າບໍລິການທາງດ້ານວິຊາການຂອງລັດ

- ຄ່າເຊົ່າຊັບສິນຂອງລັດ;
- ຄ່າສຳປະທານ;
- ຂາຍເຄື່ອງຍຶດໄດ້;
- ການບໍລິການເສັຍຄ່າຂອງລັດ;
- ລາຍຮັບຄ່າບໍລິການ ທາງດ້ານວິຊາການຂອງຂະແໜງການອື່ນໆຂອງລັດ;
- ລາຍຮັບຈາກການຂາຍໄມ້;
- ຄ່າບິນຜ່ານ;
- ຄ່າພາກຫລວງ;
- ຄ່າຊັບພະກອນທຳມະຊາດ;
- ລາຍຮັບການບໍລິການອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

2.2. ລາຍຮັບຄ່າປັບໃໝຕ່າງໆ

2.3. ລາຍຮັບຈາກການລົງທຶນຂອງລັດ

- ຈາກດອກເບ້ຍເງິນໃຫ້ກູ້ຢືມ;
- ຈາກການທົດແທນຕົ້ນທຶນເງິນໃຫ້ກູ້ຢືມ;
- ເງິນປັນຜົນກຳໄລນຳວິສາຫະກິດ

2.4. ລາຍຮັບຈາກການມອບໂອນກຳມະສິດຂອງລັດ

2.5. ລາຍຮັບຈາກບັນດາກອງທຶນຂອງລັດ

- ກອງທຶນລົບລ້າງຄວາມທຸກຍາກ;
- ກອງທຶນປົກປັກຮັກສາສິ່ງແວດລ້ອມ;
- ກອງທຶນບູລະນະທາງຫລວງ;
- ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
- ກອງທຶນປະກັນສັງຄົມ;
- ກອງທຶນອື່ນໆຂອງລັດ.

2.6. ລາຍຮັບຈາກການລະດົມທຶນ, ການປະກອບສ່ວນ ຂອງບຸກຄົນ ແລະ ການຈັດຕັ້ງອື່ນໆ

2.7. ລາຍຮັບຈາກການຊ່ວຍເຫລືອລ້າຂອງຕ່າງປະເທດ

- ເງິນຊ່ວຍເຫລືອລ້າຈາກລັດຖະບານຕ່າງປະເທດ;

- ເງິນຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນ.

2.8. ລາຍຮັບທີ່ບໍ່ແມ່ນພາສີ, ອາກອນອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 4 . ລາຍຈ່າຍງົບປະມານແຫ່ງລັດ**

ລາຍຈ່າຍງົບປະມານແຫ່ງລັດ ຕາມທີ່ກຳນົດໄວ້ໃນ ມາດຕາ 18, 19, 20, 21 ແລະ 22 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ປະກອບມີ ລາຍລະອຽດ ດັ່ງນີ້ :

1. ລາຍຈ່າຍຮັບໃຊ້ວຽກງານບໍລິຫານປົກກະຕິ

1.1. ເງິນເດືອນພື້ນຖານ

1.2. ເງິນອຸດໜູນ ແລະ ເງິນນະໂຍບາຍຕ່າງໆ

- ເງິນອຸດໜູນຄອບຄົວ
- ເງິນອຸດໜູນອອກສ້າງເສດຖະກິດຄອບຄົວ
- ເງິນປະກອບໃຫ້ສະຫວັດດີການສັງຄົມ
- ເງິນນະໂຍບາຍຄ່າແຮງງານພະນັກງານເຮັດວຽກເພີ່ມ

1.3. ລາຍຈ່າຍບໍລິຫານ

- ຊື້ໃໝ່
- ການບໍລິການຈາກທາງນອກ
- ລາຍຈ່າຍຄ່າພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ

1.4. ລາຍຈ່າຍດັດສົມສິ່ງເສີມ, ຊ່ວຍໜູນ ແລະ ເງິນບຳລຸງ

- ດັດສົມສິ່ງເສີມວິຊາການ
- ເງິນເບ້ຍລ້ຽງຕ່າງໆ
- ເງິນຊ່ວຍໜູນ
- ເງິນບຳລຸງ ແລະ ເງິນປະກອບສ່ວນເຂົ້າໃນອົງການຈັດຕັ້ງສາກົນ

1.5. ລາຍຈ່າຍການເງິນ

- ລາຍຈ່າຍດອກເບ້ຍ
- ລາຍຈ່າຍເງິນຄ້ຳປະກັນ
- ຜິດດ່ຽງຈາກອັດຕາແລກປ່ຽນ

1.6. ລາຍຈ່າຍບັງເອີນ

- ຫັກເງິນໃຫ້ຄັງສະສົມແຫ່ງລັດ
- ຄ່າປັບໃໝ
- ເງິນແຮລັດຖະບານ ແລະເງິນແຮທ້ອງຖິ່ນ ;
- ເງິນບຳເນັດ

1.7. ຫັກຄ່າຫລຸ້ຍຫ້ຽນຊັບສິນບັດຄົງທີ່

1.8. ລາຍຈ່າຍເງິນຊ່ວຍເຫລືອລ້າ

2. ລາຍຈ່າຍລົງທຶນຂອງລັດ

3. ຈ່າຍຊຳລະຕົ້ນທຶນເງິນກູ້ຢືມ

ຊຳລະເງິນກູ້ຢືມພາຍໃນປະເທດ

ຊຳລະເງິນກູ້ຢືມຈາກຕ່າງປະເທດ

4. ຊຳລະໜີ້ສິນປີກ່ອນ

4.1. ລາຍຈ່າຍເງິນເດືອນ ແລະ ເງິນນະໂຍບາຍ

4.2. ເງິນອຸດໜູນ ແລະ ເງິນນະໂຍບາຍຕ່າງໆ

4.3. ລາຍຈ່າຍບໍລິຫານ

4.4. ລາຍຈ່າຍດັດສົມສິ່ງເສີມ, ຊ່ວຍໜູນ ແລະ ເງິນບຳລຸງ

4.5. ລາຍຈ່າຍລົງທຶນຂອງລັດ

4.6. ລາຍຈ່າຍປະກອບທຶນ

4.7. ລາຍຈ່າຍເງິນຊ່ວຍເຫລືອລ້າ ແລະ ເງິນກູ້ຢືມ

5. ລາຍຈ່າຍງົບປະມານອື່ນໆຕາມແຜນການ

5.1. ລາຍຈ່າຍແກ້ໄຂຄວາມທຸກຍາກ

5.2. ລາຍຈ່າຍໃຫ້ກູ້ຢືມ

5.3. ລາຍຈ່າຍຊ່ວຍເຫລືອລ້າ

5.4. ລາຍຈ່າຍອື່ນໆ.

**ມາດຕາ 5 . ການເກີນດຸນ, ການຂາດດຸນງົບປະມານ**

ງົບປະມານແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 24, 25 ແລະ 26 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ມີການດຸນດ່ຽງ ກໍຕໍ່ເມື່ອລວມຍອດລາຍຮັບງົບປະມານ ເທົ່າກັບລວມຍອດລາຍຈ່າຍງົບປະມານ. ກໍລະນີມີການຂາດດຸນ ຫລື ເກີນດຸນ ໃຫ້ປະຕິບັດດັ່ງນີ້ :

1. ການຂາດດຸນງົບປະມານແຫ່ງລັດປະຈຳປີ ຕ້ອງສອດຄ່ອງກັບຄວາມຕ້ອງການ ແລະ ຄວາມອາດສາມາດຂອງການເງິນແຫ່ງຊາດ, ລະດັບການຂາດດຸນ ແມ່ນສະພາແຫ່ງຊາດເປັນຜູ້ຕົກລົງ. ແຫລ່ງທຶນທີ່ມາດຸນດ່ຽງການຂາດດຸນງົບປະມານແຫ່ງລັດ ແມ່ນໄດ້ມາຈາກເງິນກູ້ຢືມພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງຂອງລັດຖະບານ ແລະ ສູນກາງເປັນຜູ້ມີໜ້າທີ່ກູ້ຢືມເພື່ອການດຸນດ່ຽງ ແລະ ເງິນກູ້ຢືມດັ່ງກ່າວ ແມ່ນໃຫ້ນຳໃຊ້ສະເພາະແຕ່ການລົງທຶນເພື່ອພັດທະນາເທົ່ານັ້ນ ແລະ ບໍ່ອະນຸຍາດໃຫ້ນຳໃຊ້ເຂົ້າໃນລາຍຈ່າຍບໍລິຫານ;

2. ກໍລະນີທີ່ລາຍຮັບງົບປະມານທີ່ເປັນພູດຂອງທ້ອງຖິ່ນ ບວກກັບລາຍຮັບພູດແບ່ງປັນລະຫວ່າງສູນກາງ ແລະ ທ້ອງຖິ່ນ ຫາກຍັງບໍ່ສາມາດຕອບສະໜອງໄດ້ກັບແຜນລາຍຈ່າຍຂອງທ້ອງຖິ່ນ ແມ່ນງົບປະມານສູນກາງ ຈະເປັນຜູ້ຊ່ວຍໜູນໃຫ້ງົບປະມານທ້ອງຖິ່ນ ໃນສ່ວນທີ່ຂາດດຸນ;
3. ການເກີນດຸນລາຍຮັບທີ່ເປັນພູດຂອງສູນກາງ ແມ່ນລັດຖະບານເປັນຜູ້ຕົກລົງ ເພື່ອເພີ່ມລາຍຈ່າຍໃດໜຶ່ງ ຫລື ມອບເຂົ້າຄັງສະສົມແຫ່ງລັດ.

### ມາດຕາ 6 . ການນຳໃຊ້ສະກຸນເງິນໃນງົບປະມານແຫ່ງລັດ

ການນຳໃຊ້ສະກຸນເງິນໃນງົບປະມານແຫ່ງລັດ ເພື່ອສ້າງແຜນ, ປະຕິບັດແຜນ ແລະ ສະຫລຸບລາຍງານ ໃຫ້ປະຕິບັດດັ່ງນີ້ :

1. ການສ້າງແຜນ, ການປະຕິບັດແຜນ, ການລົງບັນຊີ ແລະ ການສະຫລຸບລາຍງານງົບປະມານແຫ່ງລັດ ຕ້ອງຄິດໄລ່ເປັນເງິນກີບ;
2. ກໍລະນີ ລາຍຮັບ ແລະ ລາຍຈ່າຍງົບປະມານ ທີ່ເປັນເງິນຕາຕ່າງປະເທດ ນອກຈາກທີ່ຕ້ອງຄິດໄລ່ເປັນເງິນກີບ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຂອງ ມາດຕານີ້ ຕ້ອງສ້າງແຜນຄາດຄະເນ ລາຍຮັບ ແລະ ລາຍຈ່າຍງົບປະມານ ເປັນເງິນຕາຕ່າງປະເທດ ໄວ້ເປັນເອກະສານຊ້ອນທ້າຍ ໃນແຜນງົບປະມານປະຈຳປີ.

### ມາດຕາ 7 . ງົບປະມານແຫ່ງລັດ ທີ່ເປັນເງິນຕາຕ່າງປະເທດ

ລາຍຮັບ ແລະ ລາຍຈ່າຍງົບປະມານ ທີ່ເປັນເງິນຕາຕ່າງປະເທດ ໃຫ້ປະຕິບັດດັ່ງນີ້ :

1. ຄັງເງິນແຫ່ງຊາດ ຕ້ອງເປີດບັນຊີເງິນຕາຕ່າງປະເທດ ຢູ່ທະນາຄານແຫ່ງ ສປປ ລາວ ເພື່ອປະຕິບັດລາຍຮັບ ແລະ ລາຍຈ່າຍ ທີ່ເປັນເງິນຕາຕ່າງປະເທດ;
2. ລາຍຮັບງົບປະມານ ທີ່ເກັບ ແລະ ຮັບເປັນເງິນຕາຕ່າງປະເທດ ຕ້ອງມອບເຂົ້າບັນຊີເງິນຕາຕ່າງປະເທດ ແຕ່ໃຫ້ລົງບັນຊີເປັນເງິນກີບ ຕາມອັດຕາແລກປ່ຽນ ຂອງທະນາຄານ ແຫ່ງ ສປປ ລາວ ທີ່ໄດ້ປະກາດໃນມື້ທີ່ໄດ້ມອບເຂົ້າບັນຊີ;
3. ບັນຊີເງິນຕາຕ່າງປະເທດຂອງງົບປະມານທີ່ເປີດໄວ້ ຢູ່ທະນາຄານ ແຫ່ງ ສປປ ລາວ ຕ້ອງໄດ້ຮັບດອກເບ້ຍ ຕາມລະບຽບການຂອງທະນາຄານ.

### ມາດຕາ 8 . ໜ້າທີ່ ແລະ ຂອບເຂດສິດຂອງອົງການຈັດຕັ້ງເກັບລາຍຮັບ

ອົງການຈັດຕັ້ງເກັບລາຍຮັບງົບປະມານແຫ່ງລັດ ທີ່ມີຄວາມຮັບຜິດຊອບຕົ້ນຕໍ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 56 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຍັງມີໜ້າທີ່ ແລະຂອບເຂດສິດ ດັ່ງລຸ່ມນີ້ :

1. ອົງການຈັດຕັ້ງທີ່ຖືກມອບໝາຍໃຫ້ເກັບລາຍຮັບ ຕ້ອງດຳເນີນການເກັບລາຍຮັບໃຫ້ຖືກຕ້ອງ ແລະຄົບຖ້ວນຕາມລະບຽບກົດໝາຍ, ຕ້ອງລົງບັນຊີລາຍຮັບທີ່ເກັບໄດ້ ໃຫ້ຖືກຕ້ອງຕາມລະບຽບ ການບັນ

ຊີແຫ່ງລັດ, ຖືກຕາມກຳນົດເວລາ ແລະ ຕາມຕົວຈິງ ໂດຍມີຫລັກຖານທາງດ້ານເອກະສານຕາມລະບຽບການຂອງກະຊວງການເງິນໄດ້ກຳນົດໄວ້;

2. ບໍ່ອະນຸຍາດໃຫ້ອຳນາດການປົກຄອງ, ອົງການຈັດຕັ້ງ ແລະ ສ່ວນບຸກຄົນທຸກຂັ້ນ ສ້າງຄັງຍ່ອຍໄວ້ຢູ່ນອກລະບົບຄັງເງິນແຫ່ງຊາດ ເພື່ອເກັບຮັກສາລາຍຮັບງົບປະມານແຫ່ງລັດ.

**ມາດຕາ 9 . ຄວາມຮັບຜິດຊອບຂອງບັນດາຫົວໜ່ວຍງົບປະມານແຫ່ງລັດ**

ບັນດາຫົວໜ່ວຍງົບປະມານແຫ່ງລັດ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງງົບປະມານແຫ່ງລັດ ຕາມທີ່ກຳນົດໃນມາດຕາ 77 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຍັງມີຄວາມຮັບຜິດຊອບ ຄຸ້ມຄອງ ແລະ ນຳໃຊ້ງົບປະມານແຫ່ງລັດ ບໍ່ວ່າ ເປັນເງິນ ຫລື ຊັບສິນ ຢ່າງເຄັ່ງຄັດ, ນຳໃຊ້ຖືກຕ້ອງກັບເປົ້າໝາຍ ແລະ ຈຸດປະສົງ ໂດຍບໍ່ໃຫ້ຕົກເຮ່ຍ ເສຍຫາຍ, ມີການປະຢັດ, ມີປະສິດທິຜົນ ແລະ ຖືບັນຊີຕາມລະບຽບ ກົດໝາຍ.

**ມາດຕາ 10 . ການເປີດເຜີຍງົບປະມານແຫ່ງລັດ**

ການເປີດເຜີຍງົບປະມານແຫ່ງລັດ ທີ່ກຳນົດໄວ້ໃນ ມາດຕາ 6, ຂໍ້ 6 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະຕິບັດດັ່ງນີ້:

1. ອຳນາດການປົກຄອງທຸກຂັ້ນ, ອົງການຈັດຕັ້ງບໍລິຫານລັດ, ອົງການຈັດຕັ້ງວິຊາການ, ບັນດາອົງການຈັດຕັ້ງການເມືອງ-ສັງຄົມອື່ນໆ ທີ່ນຳໃຊ້ງົບປະມານຂອງລັດ ຕ້ອງລາຍງານລະອຽດ ແລະ ເປີດເຜີຍແຜນງົບປະມານຂອງຕົນ ຢູ່ສະພາແຫ່ງຊາດ ແລະຕ້ອງພິມເຜີຍແຜ່ແຜນງົບປະມານຂອງຕົນທີ່ສະພາແຫ່ງຊາດຮັບຮອງ ຢູ່ໃນຈົດໝາຍເຫດທາງລັດຖະການ ພາຍໃນກຳນົດເວລາ 2 ເດືອນ;
2. ບົດສະຫລຸບການຈັດຕັ້ງປະຕິບັດງົບປະມານຂອງບັນດາຫົວໜ່ວຍງົບປະມານ ພາຍຫລັງທີ່ໄດ້ຮັບການຢັ້ງຢືນຜົນຂອງການກວດສອບຈາກອົງການກວດສອບແຫ່ງລັດແລ້ວ ຕ້ອງພິມເຜີຍແຜ່ ພາຍໃນກຳນົດເວລາ 1 ເດືອນ;
3. ຂະແໜງເກັບລາຍຮັບ, ຂະແໜງການການເງິນ, ຄັງເງິນແຫ່ງຊາດ ຕ້ອງຕິດປະກາດແຈ້ງການກ່ຽວກັບຂັ້ນຕອນ, ການປະກອບເອກະສານ, ກຳນົດເວລາ ຮັບ-ຈ່າຍ ງົບປະມານ, ການຍົກເວັ້ນ, ການຫລຸດຜ່ອນພາສີ, ອາກອນ ໃຫ້ແກ່ມວນຊົນ ແລະ ຜູ້ມາໃຊ້ບໍລິການຮັບຊາບຢ່າງທົ່ວເຖິງ ຢູ່ສະຖານທີ່ ທີ່ມີການພົວພັນຮັບ-ຈ່າຍ ງົບປະມານແຫ່ງລັດ;
4. ລັດຖະມົນຕີວ່າການກະຊວງການເງິນ ເປັນຜູ້ກຳນົດລະອຽດກ່ຽວກັບ ລະບຽບການເປີດເຜີຍຢູ່ໃນຂົງເຂດງົບປະມານແຫ່ງລັດ.

**ມາດຕາ 11 . ຄວາມຮັບຜິດຊອບ ແລະ ຂອບເຂດສິດ ໃນການສ້າງກຳນົດໝາຍແບ່ງປັນງົບປະມານແຫ່ງລັດ**

ກຳນົດໝາຍ ກ່ຽວກັບການແບ່ງປັນງົບປະມານແຫ່ງລັດ ທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ຂໍ້ 11 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງໃນການສ້າງກຳນົດໝາຍແບ່ງປັນງົບປະມານແຫ່ງລັດນີ້ ໄດ້ກຳນົດຄວາມຮັບຜິດຊອບ ແລະ ຂອບເຂດສິດຂອງບັນ ດາອົງການທີ່ມີສິດອຳນາດກ່ຽວຂ້ອງ ດັ່ງນີ້ :

1. ນາຍົກລັດຖະມົນຕີ ເປັນຜູ້ອອກດຳລັດກ່ຽວກັບກຳນົດໝາຍແບ່ງປັນງົບປະມານ ເພື່ອປະຕິບັດໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
2. ລັດຖະບານ ມອບຄວາມຮັບຜິດຊອບໃຫ້ລັດຖະມົນຕີວ່າການກະຊວງການເງິນ ເປັນຜູ້ແນະນຳລະອຽດກ່ຽວກັບການນຳໃຊ້ກຳນົດໝາຍແບ່ງປັນງົບປະມານ, ໃນການສ້າງແຜນງົບປະມານຂອງບັນດາອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ແຕ່ສູນກາງຮອດທ້ອງຖິ່ນ.

**ມາດຕາ 12 . ແຜນງົບປະມານໄລຍະກາງ**

ການສ້າງແຜນງົບປະມານໄລຍະກາງ ທີ່ກຳນົດໄວ້ໃນ ມາດຕາ 47 ຂໍ້ 1 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ໃຫ້ປະຕິບັດດັ່ງນີ້:

1. ກະຊວງການເງິນ ເປັນເຈົ້າການໃນການສ້າງແຜນງົບປະມານໄລຍະກາງ 3 ຫາ 5 ປີ ຊຶ່ງເປັນແຜນລາຍຮັບ-ລາຍຈ່າຍ ງົບປະມານແຫ່ງລັດ ໂດຍໃຫ້ແຍກໄປຕາມຂະແໜງການ, ມີການຈັດລຽງບູລິມະສິດ, ມີການກຳນົດຕົ້ນທຶນລາຍຈ່າຍ ແລະ ທິດທາງພັດທະນາຂອງຂະແໜງການ ເພື່ອນຳສະເໜີລັດຖະບານຮັບຮອງ ໃນແຕ່ລະໄລຍະ;
2. ບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງທີ່ກ່ຽວຂ້ອງທຸກຂັ້ນ ຕ້ອງສ້າງແຜນງົບປະມານຂອງຕົນໃນແຕ່ລະປີໃຫ້ສອດຄ່ອງກັບແຜນງົບປະມານໄລຍະກາງ ທີ່ລັດຖະບານໄດ້ຮັບຮອງເອົາ;
3. ແຜນງົບປະມານໄລຍະກາງ ຕ້ອງໄດ້ປັບປຸງເປັນແຕ່ລະໄລຍະໃຫ້ສອດຄ່ອງກັບແຜນງານບູລິມະສິດ ແລະ ນະໂຍບາຍພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ.

## ໝວດທີ II
## ການແບ່ງຄວາມຮັບຜິດຊອບຄຸ້ມຄອງງົບປະມານແຫ່ງລັດ

**ມາດຕາ 13 . ລະບົບງົບປະມານແຫ່ງລັດ**

ລະບົບງົບປະມານແຫ່ງລັດ ທີ່ກຳນົດໄວ້ ໃນມາດຕາ 34 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງປະກອບມີ ງົບປະມານສູນກາງ ແລະ ງົບປະມານ ທ້ອງຖິ່ນ ໂດຍມີລາຍລະອຽດ ດັ່ງນີ້ :

- ງົບປະມານສູນກາງ ປະກອບດ້ວຍ: ງົບປະມານ ຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ສະພາແຫ່ງຊາດ, ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ແນວລາວສ້າງ

ຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງອື່ນໆຂອງລັດ ຢູ່ຂັ້ນສູນກາງ ແລະທີ່ມີທີ່ຕັ້ງຢູ່ທ້ອງຖິ່ນ;

- ງົບປະມານທ້ອງຖິ່ນ ປະກອບດ້ວຍ : ງົບປະມານ ຂອງອົງການປົກຄອງທ້ອງຖິ່ນ, ຫ້ອງວ່າການຄະນະສະມາຊິກສະພາແຫ່ງຊາດ, ອົງການສານປະຊາຊົນ ແລະອົງການໄອຍະການປະຊາຊົນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂອງແຂວງ, ນະຄອນຫລວງ, ເມືອງ ແລະເທດສະບານ
- ງົບປະມານຂອງແຂວງ ແລະນະຄອນຫລວງ ປະກອບດ້ວຍ : ງົບປະມານຂອງບັນດາຂະແໜງການ ແລະອົງການຂອງແຂວງ ແລະນະຄອນຫລວງ, ງົບປະມານຂອງເມືອງ ແລະເທດສະບານ;
- ງົບປະມານຂອງເມືອງ ແລະເທດສະບານ ປະກອບດ້ວຍ : ງົບປະມານຂອງບັນດາຂະແໜງການ, ອົງການຈັດຕັ້ງຂອງເມືອງ ແລະເທດສະບານ.

**ມາດຕາ 14 . ແຫລ່ງລາຍຮັບງົບປະມານທີ່ເປັນພູດຂອງສູນກາງ ຮ້ອຍສ່ວນຮ້ອຍ (100%)**

ແຫລ່ງລາຍຮັບງົບປະມານທີ່ເປັນພູດຂອງສູນກາງຮ້ອຍສ່ວນຮ້ອຍ (100%) ທີ່ກຳນົດໄວ້ໃນ ມາດຕາ 37 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຈາກແຫລ່ງທີ່ຕົນຄຸ້ມຄອງ ປະກອບມີລາຍລະອຽດ ດັ່ງນີ້ :

1. ລາຍຮັບຈາກພາສີ ແລະສ່ວຍສາອາກອນ
   - 1.1. ພາສີຂາອອກ-ຂາເຂົ້າ
   - 1.2. ສ່ວຍສາອາກອນ
     - ອາກອນຕົວເລກທຸລະກິດ ຫລື ອາກອນມູນຄ່າເພີ່ມ , ອາກອນຊົມໃຊ້, ອາກອນກຳໄລຈາກ ສິນຄ້າຂາເຂົ້າ ;
     - ອາກອນລາຍໄດ້ ຈາກເງິນປັນຜົນກຳໄລ, ຈາກການຂາຍຫຸ້ນ ແລະຈາກທຶນອະສັງຫາລິມະຊັບອື່ນໆ ຂອງບັນດາວິສາຫະກິດ ແລະອົງການຈັດຕັ້ງຕ່າງໆ;
   - 1.3. ຄ່າທຳນຽມຕ່າງໆ
     - ຄ່າຈົດທະບຽນເອກະສານທາງການ ;
     - ຄ່າທຳນຽມວີຊາ
     - ຄ່າທຳນຽມການໃຊ້ເສັ້ນທາງຄົມມະນາຄົມ;
     - ຄ່າທຳນຽມອື່ນໆ
2. ລາຍຮັບທີ່ບໍ່ແມ່ນພາສີອາກອນ
   - 2.1. ລາຍຮັບຈາກຊັບສິນ ແລະຄ່າບໍລິການທາງດ້ານວິຊາການຂອງລັດ
     - ລາຍຮັບຈາກການຂາຍໄມ້;
     - ຄ່າຊັບພະຍາກອນທຳມະຊາດ ນອກຈາກ ຫີນຜາ, ຫີນແຮ່, ຫີນປູນ, ຊາຍ, ດິນດຳ ແລະດິນແດງ;

- ຄ່າພາກຫລວງ;
- ຄ່າສຳປະທານ;
- ຄ່າບິນຜ່ານ;
- ຄ່າເຊົ່າເຮືອນ ແລະຊັບສິນອື່ນໆ ຂອງລັດ;
- ຂາຍຊັບສິນ ແລະຫຸ້ນຂອງລັດຖະບານ;
- ຄ່າບໍລິການ ທາງດ້ານວິຊາການຂອງຂະແໜງການອື່ນໆຂອງລັດ.

2.2. ລາຍຮັບຈາກຄ່າປັບໃໝ ແລະຊັບສິ່ງຂອງທີ່ຖືກຮິບ

2.3. ລາຍຮັບຈາກການລົງທຶນຂອງລັດຖະບານ
- ຈາກດອກເບ້ຍເງິນໃຫ້ກູ້ຢືມ;
- ຈາກການທົດແທນຕົ້ນທຶນເງິນໃຫ້ກູ້ຢືມ;

2.4. ລາຍຮັບຈາກການມອບໂອນກຳມະສິດຂອງລັດ.

2.5. ລາຍຮັບຈາກບັນດາກອງທຶນ ຂອງລັດ
- ກອງທຶນລຶບລ້າງຄວາມທຸກຍາກ;
- ກອງທຶນປົກປັກຮັກສາສິ່ງແວດລ້ອມ;
- ກອງທຶນບູລະນະທາງຫລວງ;
- ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
- ກອງທຶນປະກັນສັງຄົມ;
- ກອງທຶນອື່ນໆຂອງລັດ.

2.6. ລາຍຮັບຈາກການລະດົມທຶນ, ປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ

2.7. ລາຍຮັບຈາກການຊ່ວຍເຫຼືອລ້າຂອງຕ່າງປະເທດ
- ເງິນຊ່ວຍເຫລືອລ້າຈາກລັດຖະບານຕ່າງປະເທດ;
- ເງິນຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນ.

2.8. ລາຍຮັບອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 15 . ແຫລ່ງລາຍຮັບງົບປະມານທີ່ເປັນພູດຂອງທ້ອງຖິ່ນ ຮ້ອຍສ່ວນຮ້ອຍ (100%)**

ແຫລ່ງລາຍຮັບງົບປະມານທີ່ເປັນພູດຂອງທ້ອງຖິ່ນ ຮ້ອຍສ່ວນຮ້ອຍ (100%) ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຈາກແຫລ່ງທີ່ຕົນຄຸ້ມຄອງ ປະກອບມີລາຍລະອຽດ ດັ່ງນີ້ :

1. ລາຍຮັບຈາກພາສີ ແລະສ່ວຍສາອາກອນ

1.1. ສ່ວຍສາອາກອນ
- ອາກອນລາຍໄດ້ຈາກບຸກຄົນ, ອາກອນລາຍໄດ້ຈາກເງິນປັນຜົນກຳໄລ, ຈາກການຂາຍຫຸ້ນ ແລະຈາກທຶນອະສັງຫາລິມະຊັບອື່ນໆ ຂອງບັນດາວິສາຫະກິດ.

- ພາສີທີ່ດິນ.

1.2. ຄ່າທຳນຽມຕ່າງໆ

- ຄ່າຈົດທະບຽນເອກະສານທາງການ ;
- ຄ່າທຳນຽມອື່ນໆ.

2. ລາຍຮັບທີ່ບໍ່ແມ່ນພາສີອາກອນ

2.1. ລາຍຮັບຈາກຊັບສິນ ແລະຄ່າບໍລິການທາງດ້ານວິຊາການຂອງລັດ

- ຄ່າຊັບພະຍາກອນທຳມະຊາດ ຈາກ ຫີນຜາ, ຫີນແຮ່, ຫີນປູນ, ຊາຍ, ດິນດຳ ແລະ ດິນແດງ;
- ຄ່າພາກຫລວງ;
- ຄ່າສຳປະທານ;
- ຄ່າເຊົ່າຊັບສິນຂອງລັດ ເຊັ່ນ: ເຮືອນ, ທີ່ດິນ ແລະຊັບສິນອື່ນໆ;
- ຄ່າບໍລິການທາງດ້ານວິຊາການຂອງຂະແໜງການອື່ນໆຂອງລັດ.

2.2. ລາຍຮັບຈາກຄ່າປັບໃໝ ແລະຊັບສິ່ງຂອງທີ່ຖືກຮິບ

2.3. ລາຍຮັບຈາກການລົງທຶນຂອງທ້ອງຖິ່ນ

- ຈາກດອກເບ້ຍເງິນໃຫ້ກູ້ຢືມ;
- ຈາກການທົດແທນຕົ້ນທຶນເງິນໃຫ້ກູ້ຢືມ;

2.4. ລາຍຮັບຈາກການມອບໂອນກຳມະສິດຂອງລັດ

2.5. ລາຍຮັບຈາກບັນດາກອງທຶນຂອງລັດ

2.6. ລາຍຮັບຈາກການລະດົມທຶນ, ປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ

2.7. ລາຍຮັບຈາກການຊ່ວຍເຫຼືອລ້າຂອງຕ່າງປະເທດ

- ເງິນຊ່ວຍເຫລືອລ້າຈາກລັດຖະບານຕ່າງປະເທດ;
- ເງິນຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນ.

2.8. ລາຍຮັບອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 16 . ແຫລ່ງລາຍຮັບພູດແບ່ງປັນ ລະຫວ່າງສູນກາງ ແລະ ທ້ອງຖິ່ນ**

ແຫລ່ງລາຍຮັບພູດແບ່ງປັນ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 39 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ປະກອບມີດັ່ງຕໍ່ໄປນີ້ :

1. ອາກອນຕົວເລກທຸລະກິດ ຫລື ອາກອນມູນຄ່າເພີ່ມ ຈາກການດຳເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການພາຍໃນປະເທດ
2. ອາກອນຊົມໃຊ້ ທີ່ເກັບຈາກການຜະລິດສິນຄ້າພາຍໃນປະເທດ
3. ອາກອນກຳໄລ, ອາກອນຕ່ຳສຸດ ທີ່ເກັບຈາກການດຳເນີນທຸລະກິດ ຢູ່ພາຍໃນປະເທດ
4. ລາຍຮັບເງິນປັນຜົນກຳໄລສຸດທິ ຈາກວິສາຫະກິດທີ່ລັດລົງທຶນ.

ການກຳນົດອັດຕາສ່ວນການແບ່ງປັນປະເພດລາຍຮັບ ຢູ່ໃນພູດແບ່ງປັນ ແມ່ນລັດຖະບານເປັນຜູ້ຕົກລົງເປັນແຕ່ລະໄລຍະ. ໃນກໍລະນີທີ່ທ້ອງຖິ່ນໃດ ຫາກມີລາຍຮັບພູດຂອງທ້ອງຖິ່ນ ຫຼາຍກວ່າແຜນລາຍຈ່າຍປະຈຳສົກປີ ທີ່ສະພາແຫ່ງຊາດຮັບຮອງ ລັດຖະບານ ຕ້ອງໄດ້ກຳນົດລາຍຮັບສະເພາະໃຫ້ທ້ອງຖິ່ນນັ້ນ.

**ມາດຕາ 17 . ລາຍຈ່າຍງົບປະມານສູນກາງ**

ລາຍຈ່າຍງົບປະມານສູນກາງ ຕາມທີ່ລະບຸໄວ້ໃນ ມາດຕາ 41 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ປະກອບມີລາຍລະອຽດ ດັ່ງນີ້:

1. ລາຍຈ່າຍບໍລິຫານປົກກະຕິ
   - ລາຍຈ່າຍຮັບໃຊ້ວຽກງານບໍລິຫານກິຈັກຂອງອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;
   - ລາຍຈ່າຍໃຫ້ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ສູນກາງຄຸ້ມຄອງ;
   - ລາຍຈ່າຍເງິນບຳລຸງ ແລະ ເງິນປະກອບສ່ວນເຂົ້າໃນອົງການຈັດຕັ້ງສາກົນ;
   - ລາຍຈ່າຍຊຳລະໜີ້ດອກເບັ້ຍເງິນກູ້ພາຍໃນປະເທດ ແລະ ຕ່າງປະເທດ ຂອງລັດຖະບານ ;
   - ລາຍຈ່າຍກອງທຶນຂອງລັດ ທີ່ສູນກາງຄຸ້ມຄອງ (ໂດຍຈຳແນກອອກເປັນພາກ, ຮ່ວງ ຕາມສາລະບານງົບປະມານ);
   - ລາຍຈ່າຍອົງການບໍລິຫານວິຊາການ ທີ່ສູນກາງຄຸ້ມຄອງ (ໂດຍຈຳແນກອອກເປັນ ພາກ, ຮ່ວງ ຕາມສາລະບານງົບປະມານ);
   - ລາຍຈ່າຍເງິນແຮລັດຖະບານ;
   - ລາຍຈ່າຍເຂົ້າຄັງສະສົມແຫ່ງລັດ;
2. ລາຍຈ່າຍລົງທຶນຂອງລັດ ທີ່ສູນກາງຄຸ້ມຄອງ ລວມມີ ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ, ທຶນສົມທົບບັນດາໂຄງການ ຊ່ວຍເຫຼືອລ້າ, ກູ້ຢືມ, ປະກອບທຶນຮ່ວມທຸລະກິດ
3. ລາຍຈ່າຍຊຳລະຕົ້ນທຶນເງິນກູ້ຢືມທັງພາຍໃນ ແລະຕ່າງປະເທດ
4. ລາຍຈ່າຍຊຳລະໜີ້ສິນປີກ່ອນ
5. ລາຍຈ່າຍງົບປະມານອື່ນໆຕາມແຜນການ
   - ລາຍຈ່າຍຖົມຊຸມລາຄາ ແລະອັດຕາດອກເບ້ຍຕາມນະໂຍບາຍ ຂອງລັດຖະບານ;
   - ລາຍຈ່າຍໃຫ້ກູ້ຢືມຕໍ່ຂອງລັດຖະບານ;
   - ລາຍຈ່າຍເງິນຊ່ວຍເຫລືອລ້າ ;
   - ລາຍຈ່າຍອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 18 . ລາຍຈ່າຍງົບປະມານທ້ອງຖິ່ນ**

ລາຍຈ່າຍງົບປະມານທ້ອງຖິ່ນ ຕາມທີ່ລະບຸໄວ້ໃນ ມາດຕາ 42 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ປະກອບມີລາຍລະອຽດ ດັ່ງນີ້:

1. ລາຍຈ່າຍບໍລິຫານປົກກະຕິ

- ລາຍຈ່າຍຮັບໃຊ້ວຽກງານບໍລິຫານຂອງອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການທຽບເທົ່າອື່ນໆ ຂັ້ນທ້ອງຖິ່ນ;
- ລາຍຈ່າຍໃຫ້ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງທ້ອງຖິ່ນຄຸ້ມຄອງ;
- ລາຍຈ່າຍຊຳລະໜີ້ດອກເບ້ຍເງິນກູ້ພາຍໃນ;
- ລາຍຈ່າຍກອງທຶນຂອງລັດ ທີ່ທ້ອງຖິ່ນຄຸ້ມຄອງ (ໂດຍຈຳແນກອອກເປັນພາກ, ຮ່ວງ ຕາມສາລະບານງົບປະມານ;
- ລາຍຈ່າຍອົງການບໍລິຫານວິຊາການ ທີ່ທ້ອງຖິ່ນຄຸ້ມຄອງ (ໂດຍຈຳແນກອອກເປັນພາກ, ຮ່ວງ ຕາມສາລະບານງົບປະມານ);
- ລາຍຈ່າຍເງິນແຮທ້ອງຖິ່ນ;
- ລາຍຈ່າຍຫັກເຂົ້າຄັງສະສົມແຫ່ງລັດ;

2. ລາຍຈ່າຍລົງທຶນ ທີ່ທ້ອງຖິ່ນຄຸ້ມຄອງ ລວມມີ ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ, ທຶນສົມທົບບັນດາໂຄງການ ຊ່ວຍເຫຼືອລ້າແລະກູ້ຢືມ
3. ລາຍຈ່າຍຊຳລະຕົ້ນທຶນເງິນກູ້ຢືມພາຍໃນ
4. ລາຍຈ່າຍຊຳລະໜີ້ສິນປີກ່ອນ
5. ລາຍຈ່າຍງົບປະມານອື່ນໆຕາມແຜນການ
   - ລາຍຈ່າຍເງິນຊ່ວຍເຫລືອລ້າ ;
   - ລາຍຈ່າຍອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 19 . ກຳນົດໝາຍກ່ຽວກັບການແບ່ງປັນງົບປະມານແຫ່ງລັດ

ກຳນົດໝາຍກ່ຽວກັບການແບ່ງປັນງົບປະມານແຫ່ງລັດ ຕາມທີ່ລະບຸໄວ້ໃນ ມາດຕາ 3 ຂໍ້ 11 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງການກຳນົດວົງເງິນ ທີ່ຈະແບ່ງໃຫ້ຂະແໜງການ ແລະ ທ້ອງຖິ່ນ ຕ້ອງສອດຄ່ອງກັບຈຸດພິເສດ, ໜ້າທີ່ການເມືອງຂອງຂະແໜງການ ແລະຄວາມເທົ່າທຽມກັນໃນການພັດທະນາ ໂດຍຮັກສາລະດັບຄົງທີ່ໄວ້ໃນໄລຍະ 3 ຫາ 5 ປີ.

ການສ້າງກຳນົດໝາຍກ່ຽວກັບການແບ່ງປັນງົບປະມານແຫ່ງລັດ ແມ່ນໄດ້ກຳນົດ ດັ່ງນີ້:

1. ກຳນົດໝາຍແບ່ງປັນລາຍຈ່າຍບໍລິຫານປົກກະຕິ ແມ່ນໃຫ້ອີງໃສ່ຈຳນວນພະນັກງານ, ລັດຖະກອນ, ພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ຂອງແຕ່ລະຂະແໜງການ ແລະທ້ອງຖິ່ນ;
2. ກຳນົດໝາຍແບ່ງປັນລາຍຈ່າຍງົບປະມານລົງທຶນ ແມ່ນໃຫ້ອີງໃສ່ຈຳນວນປະຊາກອນ, ລະດັບຄວາມທຸກຍາກ, ເງື່ອນໄຂທີ່ຕັ້ງທາງດ້ານພູມສາດ, ເຂດຫ່າງໄກສອກຫລີກ ແລະ ຈຸດພິເສດທ່າແຮງທາງດ້ານເສດຖະກິດ-ສັງຄົມ ຂອງແຕ່ລະທ້ອງຖິ່ນ.

**ມາດຕາ 20 . ການຊ່ວຍໝູນໃຫ້ງົບປະມານທ້ອງຖິ່ນ**

ການຊ່ວຍໝູນງົບປະມານທ້ອງຖິ່ນ ຕາມທີ່ລະບຸໄວ້ໃນ ມາດຕາ 43 ແລະ 44 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ໄດ້ແບ່ງອອກເປັນສອງປະເພດ ຄື: ການຊ່ວຍໝູນແບບທົ່ວໄປ ແລະ ການຊ່ວຍໝູນແບບມີເປົ້າໝາຍ. ແຫລ່ງລາຍຮັບງົບປະມານທີ່ມາຊ່ວຍໝູນດັ່ງກ່າວ ແມ່ນມາຈາກລາຍຮັບພູດແບ່ງປັນລະຫວ່າງສູນກາງ ແລະ ທ້ອງຖິ່ນ ແລະ ອີກສ່ວນໜຶ່ງ ຈາກພູດລາຍຮັບຂອງສູນກາງ.

1. ການຊ່ວຍໝູນງົບປະມານທ້ອງຖິ່ນແບບທົ່ວໄປ ແມ່ນການຊ່ວຍໝູນເພື່ອເຮັດໃຫ້ງົບປະມານຂອງທ້ອງຖິ່ນສົມດຸນ ;
2. ນອກຈາກການຊ່ວຍໝູນງົບປະມານທ້ອງຖິ່ນແບບທົ່ວໄປແລ້ວ ງົບປະມານທ້ອງຖິ່ນຍັງຈະໄດ້ຮັບການຊ່ວຍໝູນແບບມີເປົ້າໝາຍ ເພື່ອສະໜັບສະໜູນການປະຕິບັດນະໂຍບາຍຂອງລັດຖະບານທີ່ໄດ້ວາງອອກ ເປັນຕົ້ນ :

   - ປະຕິບັດແຜນງານ, ໂຄງການລົງທຶນ ຊຶ່ງລັດຖະບານມອບເພີ່ມເຕີມໃຫ້;

   - ແກ້ໄຂບັນຫາສຸກເສີນ, ຮີບດ່ວນ ທີ່ເກີດຈາກໄພທຳມະຊາດ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການລະບາດຂອງພະຍາດ ຊຶ່ງບໍ່ໄດ້ຄາດຄະເນໄວ້ກ່ອນໃນແຜນງົບປະມານ ປະຈຳສົກ ປີຂອງທ້ອງຖິ່ນ.

**ມາດຕາ 21 . ຫົວໜ່ວຍງົບປະມານຂອງເມືອງ ແລະ ເທດສະບານ**

ຫົວໜ່ວຍງົບປະມານຂອງເມືອງ ແລະ ເທດສະບານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 73 ຂໍ້ 4 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແມ່ນຫົວໜ່ວຍງົບປະມານຂັ້ນສອງຂຶ້ນໂດຍກົງກັບງົບປະມານຂັ້ນແຂວງ, ນະຄອນຫລວງ ແລະ ມີໜ້າທີ່ເກັບລາຍຮັບ ຕາມອົງການປົກຄອງແຂວງ, ນະຄອນຫລວງແບ່ງປັນໃຫ້ເກັບ ໂດຍສະເພາະແມ່ນລາຍຮັບຈາກພາສີທີ່ດິນ, ລາຍຮັບຈາກຊັບສິນ, ຄ່າທຳນຽມຕ່າງໆ, ລາຍຮັບຄ່າບໍລິການທາງດ້ານວິຊາການຕ່າງໆ ທີ່ຕິດພັນກັບທີ່ດິນ ແລະ ປະຕິບັດແຜນລາຍຈ່າຍງົບປະມານໃນຂອບເຂດ ທີ່ອົງການປົກຄອງແຂວງ, ນະຄອນຫລວງຕົກລົງ ແບ່ງປັນໃຫ້.

**ມາດຕາ 22 . ການປະຕິບັດງົບປະມານ ຂອງເມືອງ ແລະ ເທດສະບານ**

ຫ້ອງການການເງິນເມືອງ ແລະ ເທດສະບານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 76 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ເປັນຜູ້ຈັດຕັ້ງປະຕິບັດ ແຜນລາຍຮັບ, ລາຍຈ່າຍງົບປະມານ ຕາມຜູ້ສັ່ງການ (ເຈົ້າແຂວງ, ເຈົ້າຄອງນະຄອນ) ໂດຍຜ່ານລະບົບຄັງ ເງິນແຫ່ງຊາດ.

ຫ້ອງການການເງິນເມືອງ ແລະ ເທດສະບານ ຕ້ອງຮັບຜິດຊອບການລົງບັນຊີ, ການກວດກາ ສະຫລູບສັງລວມ ແລະ ການລາຍງານ ການປະຕິບັດລາຍຮັບ, ລາຍຈ່າຍງົບປະມານ ໃຫ້ອົງການປົກຄອງເມືອງ ແລະ ເທດສະບານ ເພື່ອລາຍງານຕໍ່ອົງການປົກຄອງແຂວງ ແລະ ນະຄອນຫລວງ ຕາມລະບຽບການທີ່ໄດ້ກຳນົດໄວ້.

ລາຍຮັບງົບປະມານທັງໝົດ ທີ່ອົງການປົກຄອງແຂວງ, ນະຄອນຫລວງ ມອບໝາຍໃຫ້ເມືອງ ແລະເທດສະບານ ເກັບ ຕ້ອງເອົາເຂົ້າລວມສູນຢູ່ບັນຊີງົບປະມານຂອງແຂວງ, ນະຄອນຫລວງ ຢູ່ຄັງເງິນແຫ່ງຊາດ. ບໍ່ອະນຸຍາດໃຫ້ອົງການການປົກຄອງເມືອງ, ເທດສະບານ ເອົາລາຍຮັບດັ່ງກ່າວໄປຈ່າຍລ່ວງໜ້າ ຫລື ປະຕິບັດການຈິດ ຮັບ-ຈິດຈ່າຍບັນຊີງົບປະມານ.

ສໍາລັບບັນດາເມືອງ ຢູ່ເຂດຫ່າງໄກສອກຫລີກ ແລະ ບໍ່ມີເງື່ອນໄຂການບໍລິການ ຂອງຄັງເງິນແຫ່ງຊາດ ແມ່ນອະນຸຍາດໃຫ້ເອົາລາຍຮັບຂອງຕົນທີ່ເກັບໄດ້ ມາຖອກຢູ່ຄັງເງິນແຫ່ງຊາດບ່ອນທີ່ໃກ້ສຸດ ເດືອນລະຄັ້ງ ແລະ ອະນຸຍາດໃຫ້ປະຕິບັດການຈິດຮັບ-ຈິດຈ່າຍ ຕາມແຜນງົບປະມານຂອງເມືອງຕົນ.

## ມາດຕາ 23 . ທົວໜ່ວຍງົບປະມານສົມດຸນ ຂອງເມືອງ ແລະ ເທດສະບານ

ທົວໜ່ວຍງົບປະມານສົມດຸນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 24 ຂໍ້ດໜ້າ 1 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະເພາະທົວໜ່ວຍງົບປະມານສົມດຸນ ຂອງເມືອງ ແລະເທດສະບານ ແມ່ນກະຊວງການເງິນເປັນເຈົ້າການຄົ້ນຄ້ວາ ລະບຽບຫລັກການ ກ່ຽວກັບການສ້າງທົວໜ່ວຍງົບປະມານສົມດຸນຢູ່ຂັ້ນເມືອງ ແລະເທດສະບານ ໂດຍແບ່ງຄວາມຮັບຜິດຊອບດ້ານລາຍຮັບ ແລະແບ່ງຄວາມຮັບຜິດຊອບດ້ານລາຍຈ່າຍງົບປະມານ ລະຫວ່າງງົບປະມານຂອງ ແຂວງ, ນະຄອນຫລວງ ກັບ ງົບປະມານຂອງເມືອງ, ເທດສະບານ ບົນຫລັກການພື້ນຖານ ດັ່ງນີ້ :

1. ຕ້ອງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະສອດຄ່ອງກັບລັກສະນະຈຸດພິເສດ ດ້ານເສດຖະກິດ, ພູມສາດ ແລະປະຊາກອນຂອງທ້ອງຖິ່ນນັ້ນໆ ພ້ອມນັ້ນກໍ່ຕ້ອງຄໍານຶງເຖິງຄວາມອຸດົມສົມບູນ ແລະຄວາມອາດສາມາດ ຂອງພື້ນທີ່ດິນ ແລະຊັບພະຍາກອນຂອງທ້ອງຖິ່ນນັ້ນໆ ;
2. ແບ່ງຄວາມຮັບຜິດຊອບດ້ານລາຍຈ່າຍໃນການລົງທຶນ ແລະ ການພັດທະນາບັນດາໂຮງຮຽນ ສາມັນສຶກສາທົ່ວໄປຂອງລັດ ໂດຍສະເພາະຊັ້ນອະນຸບານ, ປະຖົມ ແລະມັດທະຍົມຕອນຕົ້ນ; ໂຮງໝໍເມືອງ, ສຸກສາລາ ແລະ ສະຖານສຸຂະອະນາໄມ; ບັນດາລະບົບໄຟຟ້າ ຕົວເມືອງ ແລະເທດສະບານ, ນໍ້າປະປາ ແລະຮ່ອງລະບາຍນໍ້າເສຍສາທາລະນະ; ລະບົບການຈໍລະຈອນ ໃນຕົວເມືອງ ຫລື ເທດສະບານ, ການບໍາບັດສິ່ງເສດເຫລືອ ໃນຕົວເມືອງ ຫລື ເທດສະບານ, ສວນສາທາລະນະ, ສະຖານທີ່ພັກຜ່ອນ ແລະສະໂມສອນກິລາ ... ແລະສະຫວັດດີການສັງຄົມ.

ລັດຖະມົນຕີວ່າການກະຊວງການເງິນ ເປັນຜູ້ອອກບົດແນະນໍາຈັດຕັ້ງປະຕິບັດລະອຽດສະເພາະ.

## ມາດຕາ 24 . ລາຍຈ່າຍງົບປະມານອຸດໜູນພະນັກງານຂັ້ນຮາກຖານບ້ານ

ການຈັດແບ່ງລາຍຈ່າຍງົບປະມານ ຕາມຂະແໜງການປົກຄອງ ຕາມທີ່ໄດ້ກໍານົດໃນມາດຕາ 23 ຂໍ້ດໜ້າທີໜຶ່ງ ຂອງກົດ ໝາຍວ່າດ້ວຍງົບປະມານແຫ່ງລັດ ສະເພາະແຜນລາຍຈ່າຍງົບປະມານ ຂອງອົງ

ການປົກຄອງບ້ານ ແມ່ນໃຫ້ເອົາເຂົ້າໃນແຜນລາຍຈ່າຍ ງົບປະມານຂອງເມືອງ ແລະເທດສະບານ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານບໍລິຫານປົກກະຕິ, ເງິນອຸດໜູນຕຳແໜ່ງ ໃຫ້ແກ່ພະນັກງານຮາກຖານບ້ານ.

ຜູ້ສັ່ງການ ( ເຈົ້າແຂວງ, ເຈົ້າຄອງນະຄອນຫລວງ ) ມອບສິດສັ່ງການແທນ ໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ ປະຕິບັດລາຍຈ່າຍງົບປະມານຮັບໃຊ້ວຽກງານຂອງອົງການປົກຄອງບ້ານ ໂດຍຜ່ານການເບີກຈ່າຍຢູ່ຄັງເງິນແຫ່ງຊາດ, ພ້ອມກັນນັ້ນ ຫ້ອງການການເງິນເມືອງ ແລະເທດສະບານ ຕ້ອງຮັບຜິດຊອບການຖືບັນຊີ, ສະຫລຸບສັງລວມ, ກວດກາ ແລະລາຍງານການປະຕິບັດລາຍຈ່າຍງົບປະມານຂອງອົງການປົກຄອງບ້ານ.

## ມາດຕາ 25 . ການລະດົມທຶນໃນການພັດທະນາເສດຖະກິດ-ສັງຄົມ

ການລະດົມທຶນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 35 ຂໍ້ 12 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ເພື່ອນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕ້ອງປະຕິບັດ ດັ່ງນີ້:

1. ອຳນາດການປົກຄອງທ້ອງຖິ່ນ ຕ້ອງສ້າງແຜນລະດົມທຶນ ແລະນຳໃຊ້ແຫລ່ງທຶນ ທີ່ໄດ້ມາຈາກການປະກອບສ່ວນຂອງປະຊາຊົນ ບົນພື້ນຖານລະບຽບກົດໝາຍໄດ້ກຳນົດ ແລະຕ້ອງໄດ້ເອົາເຂົ້າໃນແຜນງົບປະມານຂອງທ້ອງຖິ່ນຕົນ;
2. ລາຍຮັບທີ່ໄດ້ມາຈາກການລະດົມທຶນ, ການປະກອບສ່ວນຂອງປະຊາຊົນ ຕ້ອງຈົດເຂົ້າເປັນລາຍຮັບພູດຂອງທ້ອງຖິ່ນຮ້ອຍສ່ວນຮ້ອຍ ແລະນຳໃຊ້ໃຫ້ຖືກເປົ້າໝາຍ, ມີການຄຸ້ມຄອງ, ມີການກວດກາບົນພື້ນຖານລະບຽບການທີ່ໄດ້ກຳນົດໄວ້.

## ມາດຕາ 26 . ນະໂຍບາຍສົ່ງເສີມການເກັບລາຍຮັບງົບປະມານ

ນະໂຍບາຍສົ່ງເສີມການເກັບລາຍຮັບ ຕາມທີ່ລະບຸໄວ້ໃນ ມາດຕາ 45 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະຕິບັດ ດັ່ງນີ້ :

- ໃນກໍລະນີທີ່ທ້ອງຖິ່ນປະຕິບັດລາຍຮັບທີ່ເປັນພູດຂອງທ້ອງຖິ່ນ ໄດ້ລື່ນແຜນການ, ພາຍຫລັງສະຫລຸບຂາດຕົວງົບປະມານ ໃນວັນທີ 31 ເດືອນທັນວາແລ້ວ ຈຳນວນຕົວເລກລາຍຮັບທີ່ລື່ນແຜນນັ້ນ ແມ່ນມອບໃຫ້ອົງການປົກຄອງທ້ອງຖິ່ນນຳໃຊ້ທັງໝົດ ;
- ໃນກໍລະນີລາຍຮັບທີ່ເປັນພູດຂອງສູນກາງ ແລະລາຍຮັບພູດແບ່ງປັນ ລະຫວ່າງສູນກາງ ແລະທ້ອງຖິ່ນ ຫາກປະຕິບັດໄດ້ລື່ນແຜນການ ຈຳນວນຕົວເລກທີ່ລື່ນແຜນການນັ້ນ ລັດຖະບານຈະເປັນຜູ້ແບ່ງປັນ ໃຫ້ທ້ອງຖິ່ນ ແລະສູນກາງ ຕາມອັດຕາສ່ວນທີ່ເໝາະສົມ.

ອັດຕາສ່ວນແບ່ງປັນທີ່ກ່າວຂ້າງເທິງນັ້ນ ຕ້ອງກຳນົດບົນພື້ນຖານ ຂອງຖານລາຍຮັບພູດງົບປະມານສູນກາງທີ່ປະຕິບັດຢູ່ທ້ອງຖິ່ນ ແລະເປົ້າໝາຍການພັດທະນາທີ່ເປັນບູລິມະສິດ ຂອງລັດຖະບານຢູ່ທ້ອງຖິ່ນນັ້ນ.

ການນຳໃຊ້ລາຍຮັບທີ່ປະຕິບັດໄດ້ລື່ນແຜນການ ແມ່ນເພື່ອເພີ່ມເຂົ້າເປັນລາຍຈ່າຍພັດທະນາ ເຊັ່ນ: ການພັດທະນາພື້ນຖານໂຄງລ່າງ, ການຊຳລະໜີ້ສິນ ແລະການແກ້ໄຂຄວາມທຸກຍາກ ຫລື

ມອບເຂົ້າຄັງສະສົມແຫ່ງລັດ. ການໃຊ້ຈ່າຍລາຍຮັບທີ່ລື່ນແຜນດັ່ງກ່າວ ຕ້ອງໄດ້ເອົາເພີ້ມເຂົ້າໃນແຜນລາຍຈ່າຍງົບປະມານຂອງສົກປີຖັດມາ.

## ໝວດທີ III

## ການສ້າງແຜນ, ການຮັບຮອງ ແລະ ການມອບແຜນງົບປະມານແຫ່ງລັດ

### ມາດຕາ 27 . ການສ້າງແຜນງົບປະມານແຫ່ງລັດປະຈຳສົກປີ

ການສ້າງແຜນງົບປະມານແຫ່ງລັດປະຈຳສົກປີ ຕາມທີ່ລະບຸໄວ້ໃນ ມາດຕາ 47 ຂອງກົດໝາຍງົບປະມານແຫ່ງລັດ ຕ້ອງອີງໃສ່ບັນດາພື້ນຖານຫລັກການ ດັ່ງນີ້ :

1. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລວມທັງແຜນປ້ອງກັນຊາດ- ປ້ອງກັນຄວາມສະ ຫງົບ;
2. ໜ້າທີ່ທາງດ້ານວິຊາສະເພາະ ຂອງບັນດາອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງທຸກຂັ້ນ ລວມທັງສູນກາງ ແລະທ້ອງຖິ່ນ;
3. ການແບ່ງຄວາມຮັບຜິດຊອບດ້ານລາຍຮັບ ແລະລາຍຈ່າຍງົບປະມານ, ອັດຕາສ່ວນການແບ່ງປັນລາຍຮັບງົບປະມານ ລະຫວ່າງສູນກາງ ແລະທ້ອງຖິ່ນ, ຄວາມອາດສາມາດການຊ່ວຍໜູນງົບປະມານຂອງສູນກາງໃຫ້ທ້ອງຖິ່ນ;
4. ບັນດານະໂຍບາຍການເງິນ-ງົບປະມານ, ບັນດາລະບອບ-ກົນໄກ ແລະມາດຕະການ, ກຳນົດໝາຍແບ່ງປັນງົບປະມານ ແລະ ກຳນົດໝາຍໃຊ້ຈ່າຍບໍລິຫານຂອງລັດ;
5. ແຜນຍຸດທະສາດການເງິນ ໄລຍະກາງ ແລະໄລຍະຍາວ, ດຳລັດຂອງນາຍົກລັດຖະມົນຕີ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດສົກປີຕໍ່ໄປ, ບົດແນະນຳຂອງກະຊວງການເງິນ ກ່ຽວກັບການສ້າງແຜນງົບປະມານປະຈຳປີ, ບົດແນະນຳຂອງກະຊວງແຜນການ ແລະການລົງທຶນ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ ແລະບັນດາເອກະສານແນະນຳຂອງອົງການປົກຄອງທ້ອງຖິ່ນ ;
6. ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດ ຂອງປີຜ່ານມາ.

### ມາດຕາ 28 . ລະດັບຄາດໝາຍສຳລັບການສ້າງແຜນງົບປະມານແຫ່ງລັດ ປະຈຳສົກປີ

ການສ້າງແຜນງົບປະມານແຫ່ງລັດ ປະຈຳສົກປີ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 47 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງຕອບສະໜອງ ກັບລະດັບຄາດໝາຍ ດັ່ງນີ້ :

1. ການສ້າງແຜນລາຍຈ່າຍງົບປະມານຂອງແຕ່ລະຂັ້ນ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຜິດຊອບດ້ານລາຍຈ່າຍ ທີ່ງົບປະມານຂັ້ນເທິງຂອງຕົນກຳນົດໃຫ້ ;
2. ການສ້າງແຜນລາຍຮັບງົບປະມານຂອງແຕ່ລະຂັ້ນ ຕ້ອງສ້າງບົນພື້ນຖານການແບ່ງຄວາມຮັບຜິດຊອບດ້ານລາຍຮັບ ແລະຂໍ້ມູນທີ່ສາມາດປະຕິບັດໄດ້ຢ່າງຊັດເຈນ ແລະແນ່ນອນ;

3. ການສ້າງແຜນງົບປະມານຂອງຫົວໜ່ວຍງົບປະມານແຕ່ລະຂັ້ນ ຕ້ອງປະຕິບັດໃຫ້ສອດຄ່ອງກັບເນື້ອໃນ, ແບບຮ່າງລາຍງານ, ຖືກຕ້ອງຕາມກຳນົດເວລາ ຢ່າງເຂັ້ມງວດ ແລະຕ້ອງປະຕິບັດ ຕາມສາລະບານງົບປະມານແຫ່ງລັດ ແລະບົດແນະນຳຂອງກະຊວງການເງິນ ຊຶ່ງປະກອບດ້ວຍ :
   - ສຳລັບການສ້າງແຜນລາຍຮັບງົບປະມານ ຕ້ອງປະຕິບັດບົນພື້ນຖານອັດຕາການຂະຫຍາຍຕົວຂອງເສດຖະກິດ, ຕົວເລກຊີ້ບອກເສດຖະກິດມະຫາພາກ ທີ່ກ່ຽວຂ້ອງ ແລະບັນດານິຕິກຳຕ່າງໆ ກ່ຽວກັບລາຍຮັບງົບປະມານ;
   - ສຳລັບການສ້າງແຜນລາຍຈ່າຍງົບປະມານການລົງທຶນຂອງລັດ ຕ້ອງປະຕິບັດບົນພື້ນຖານບັນດາໂຄງການການລົງທຶນ ທີ່ສາມາດໃຫ້ຜົນຕອບແທນຢ່າງເໝາະສົມ ແລະສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນການລົງທຶນຂອງລັດ ຂອງປີຜ່ານມາ ແລະຄວາມອາດສາມາດດ້ານງົບປະມານປະຈຳປີ; ພ້ອມກັນນັ້ນ ກຳນົດເອົາບັນດາໂຄງການ ທີ່ກຳລັງສືບຕໍ່ປະຕິບັດ ແລະມີຢູ່ໃນແຜນລົງທຶນຂອງລັດ ເປັນບູລິມະສິດໃນການຈັດສັນລາຍຈ່າຍລົງທຶນ;
   - ສຳລັບການສ້າງແຜນລາຍຈ່າຍງົບປະມານບໍລິຫານປົກກະຕິ ຕ້ອງໃຫ້ສອດຄ່ອງກັບບັນດານະໂຍບາຍ, ມາດຕະຖານ ແລະກຳນົດໝາຍແບ່ງປັນງົບປະມານ ແລະກຳນົດໝາຍໃຊ້ຈ່າຍບໍລິຫານລັດ.
4. ການສ້າງແຜນງົບປະມານ ຂອງຫົວໜ່ວຍງົບປະມານທຸກຂັ້ນ ຕ້ອງລວມເອົາບັນດາລາຍຈ່າຍໜີ້ສິນທີ່ໄດ້ຮັບການກວດກາ ແລະ ຢັ້ງຢືນຈາກອົງການທີ່ມີສິດອຳນາດຢ່າງຄົບຖ້ວນ;
5. ການສ້າງແຜນການກູ້ຢືມເງິນ ເພື່ອດຸ່ນດ່ຽງງົບປະມານແຫ່ງລັດ ຕ້ອງໄດ້ປະຕິບັດບົນພື້ນຖານແຜນຍຸດທະສາດລະດົມເງິນຈາກພາຍໃນ ແລະ ຕ່າງປະເທດ, ຄວາມອາດສາມາດຂອງແຫລ່ງເງິນກູ້ຢືມ, ຄວາມອາດສາມາດໃນການຊຳລະໜີ້ສິນ ແລະອັດຕາການຂາດດຸນງົບປະມານ ທີ່ສາມາດຄຸ້ມຄອງໄດ້ ໂດຍຜ່ານການຮັບຮອງຂອງສະພາແຫ່ງຊາດ.

**ມາດຕາ 29 . ກຳນົດເວລາໃນການສ້າງແຜນງົບປະມານແຫ່ງລັດປະຈຳສົກປີ**

ການກຳນົດເວລາສ້າງແຜນງົບປະມານແຫ່ງລັດ ປະຈຳສົກປີ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 51 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະຕິບັດ ດັ່ງຕໍ່ໄປນີ້ :

1. ຕົ້ນເດືອນມັງກອນ ນາຍົກລັດຖະມົນຕີ ອອກຄຳສັ່ງແນະນຳທາງດ້ານນະໂຍບາຍ ຕໍ່ກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ຂອງສົກງົບປະມານປີຕໍ່ໄປ;
2. ພາຍໃນເດືອນມັງກອນ ກະຊວງການເງິນ ອອກບົດແນະນຳ ກ່ຽວກັບຈຸດປະສົງ, ເປົ້າໝາຍ, ເນື້ອໃນ ແລະ ກຳນົດເວລາ ຂອງການສ້າງແຜນງົບປະມານ ແລະແຈ້ງເພດານຕົວເລກມະຫາພາກດ້ານລາຍຮັບ, ລາຍຈ່າຍ ແລະຊຳລະໜີ້ສິນ ໃຫ້ບັນດາອົງການຈັດຕັ້ງລັດ, ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງທຸກຂັ້ນ ແຕ່ສູນກາງຮອດທ້ອງຖິ່ນ.

   ກະຊວງແຜນການ ແລະການລົງທຶນ ອອກບົດແນະນຳ ກ່ຽວກັບຈຸດປະສົງ, ເປົ້າໝາຍ, ເນື້ອໃນ ແລະກຳນົດເວລາ ຂອງການຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນການ

ລົງທຶນ ແລະປະສານສົມທົບກັບກະຊວງການເງິນ ກ່ຽວກັບຕົວເລກເພດານລາຍຈ່າຍຂອງການລົງທຶນຂອງລັດ.

3. ພາຍໃນເດືອນກຸມພາ ອົງການຈັດຕັ້ງຂອງລັດ ແລະອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງທຸກຂັ້ນ ແຕ່ສູນກາງຮອດທ້ອງຖິ່ນ ສ້າງແຜນງົບປະມານ ໃຫ້ສອດຄ່ອງກັບແຜນວຽກ, ແຜນງານ, ແຜນໂຄງການ ຕາມຄວາມຮັບຜິດຊອບຂອງຕົນ ໂດຍໃຫ້ມີການຈັດລຽງບູລິມະສິດ;
4. ພາຍໃນເດືອນເມສາ ກະຊວງການເງິນ ສັງລວມຮ່າງແຜນງົບປະມານ ຂອງແຕ່ລະຂະແໜງການ ແລະທ້ອງຖິ່ນ ເຂົ້າເປັນແຜນງົບປະມານແຫ່ງລັດປະຈຳສົກປີ ແລະລາຍງານລັດຖະບານ ພິຈາລະນາ.

**ມາດຕາ 30 . ການສ້າງແຜນງົບປະມານຂອງຂະແໜງການເກັບລາຍຮັບ ຕາມສາຍຕັ້ງ**

ການສ້າງແຜນງົບປະມານຂອງຂະແໜງການເກັບລາຍຮັບຕາມສາຍຕັ້ງ ຕາມທີ່ກຳນົດໄວ້ໃນ ມາດຕາ 56 ຂໍ້ 1 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະຕິບັດດັ່ງນີ້:

1. ກົມພາສີ ຕ້ອງສ້າງແຜນລາຍຮັບງົບປະມານ ຈາກພາສີຂາເຂົ້າ-ຂາອອກ, ບັນດາອາກອນ ທີ່ຕິດພັນກັບສິນຄ້າ ແລະການບໍລິການຂາເຂົ້າ-ຂາອອກ, ອາກອນມູນຄ່າເພີ່ມຂາເຂົ້າ ແລະບັນດາແຫລ່ງພັນທະອື່ນໆ ທີ່ກ່ຽວຂ້ອງກັບບັນດາກິດຈະກຳຂອງສິນຄ້າ ແລະການບໍລິການຂາເຂົ້າ-ຂາອອກ ຢູ່ພາຍໃນຂົງເຂດຄວາມຮັບຜິດຊອບ ຕາມການແບ່ງປັນລາຍຮັບທີ່ໄດ້ກຳນົດໄວ້ ໃນມາດຕາ 16 ຂອງດຳລັດສະບັບນີ້ ແລະ ສົ່ງໃຫ້ກົມສ່ວຍສາອາກອນ, ກົມງົບປະມານ ກະຊວງການເງິນ ພ້ອມກັນນັ້ນກໍ່ຕ້ອງແຈ້ງໃຫ້ແຕ່ລະທ້ອງຖິ່ນຊາບ;
2. ກົມສ່ວຍສາອາກອນ ຕ້ອງສ້າງແຜນລາຍຮັບ ຈາກບັນດາແຫລ່ງອາກອນ ແລະ ບັນດາແຫລ່ງລາຍຮັບອື່ນໆ ທີ່ນອນໃນຂົງເຂດຄວາມຮັບຜິດຊອບ ຕາມການແບ່ງປັນລາຍຮັບ ທີ່ໄດ້ກຳນົດໄວ້ໃນມາດຕາ 14, 15 ແລະ 16 ຂອງດຳລັດສະບັບນີ້ ແລະ ສົ່ງໃຫ້ກົມພາສີ, ກົມງົບປະມານ ກະຊວງການເງິນ ພ້ອມກັນນັ້ນກໍ່ຕ້ອງແຈ້ງໃຫ້ແຕ່ລະທ້ອງຖິ່ນຊາບ.

**ມາດຕາ 31 . ການສ້າງແຜນງົບປະມານຂອງຫົວໜ່ວຍງົບປະມານທຸກຂັ້ນຂອງສູນກາງ**

ການສ້າງແຜນງົບປະມານ ຂອງຫົວໜ່ວຍງົບປະມານທຸກຂັ້ນຂອງສູນກາງ ຕາມທີ່ກຳນົດໄວ້ໃນ ມາດຕາ 31 ຂໍ້ 1 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະຕິບັດດັ່ງນີ້ :

1. ຫົວໜ່ວຍງົບປະມານແຕ່ລະຂັ້ນຂອງສູນກາງ ຕ້ອງສ້າງແຜນລາຍຮັບງົບປະມານ ແລະແຜນລາຍຈ່າຍງົບປະມານໃນຂອບເຂດການແບ່ງຄວາມຮັບຜິດຊອບຂອງຕົນ ແລະສົ່ງແຜນດັ່ງກ່າວ ໃຫ້ຜູ້ສັ່ງການ ເພື່ອພິຈາລະນາ ແລະສັງລວມ ;
2. ບັນດາຂະແໜງການ ລວມທັງບັນດາຂະແໜງການທີ່ຂຶ້ນກັບສາຍຕັ້ງ ຕ້ອງສ້າງ ແລະສັງລວມແຜນງົບປະມານໄປຕາມຂະແໜງການຂອງຕົນແຕ່ສູນກາງຮອດທ້ອງຖິ່ນ ໂດຍມີການປະສານສົມທົບປຶກສາຫາລື ກັບອົງການປົກຄອງທ້ອງຖິ່ນ ທີ່ຮັບຜິດຊອບວຽກງານການສ້າງແຜນງົບປະມານ ແລະ

ການລົງທຶນຂອງລັດ ຂອງແຕ່ລະຂັ້ນ ແລ້ວສົ່ງໃຫ້ກະຊວງການເງິນ ແລະກະຊວງແຜນການ ແລະການລົງທຶນ.

**ມາດຕາ 32 . ການສ້າງແຜນງົບປະມານທ້ອງຖິ່ນ**

ການສ້າງແຜນງົບປະມານທ້ອງຖິ່ນ ຕາມທີ່ກຳນົດໄວ້ໃນມາດຕາ 32 ຂໍ້ 1 ແລະ ມາດຕາ 75 ຂໍ້ 2 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະ ຕິບັດ ດັ່ງນີ້:

1. ພະແນກການເງິນ ຂອງແຂວງ ແລະນະຄອນຫລວງ ຕ້ອງຮັບຜິດຊອບເປັນເຈົ້າການປະສານສົມທົບຢ່າງເຂັ້ມງວດກັບພະແນກແຜນການ ແລະການລົງທຶນ, ຂະແໜງການອື່ນໆ ທີ່ກ່ຽວຂ້ອງ ລວມທັງຂະແໜງພາສີ ແລະຂະແໜງສ່ວຍສາອາກອນ ທີ່ຕັ້ງຢູ່ໃນທ້ອງຖິ່ນຕົນ ເພື່ອສ້າງ ແລະສັງລວມແຜນງົບປະມານຂອງຫົວໜ່ວຍງົບປະມານທຸກຂັ້ນ ລວມທັງຂັ້ນເມືອງ, ເທດສະບານ ແລະສົ່ງໃຫ້ອົງການປົກຄອງແຂວງ ແລະນະຄອນຫລວງ ພິຈາລະນາ ໂດຍມີ ການເຂົ້າຮ່ວມປຶກສາຫາລື ກັບຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
2. ອົງການປົກຄອງແຂວງ ແລະນະຄອນຫລວງ ຕ້ອງສົ່ງແຜນງົບປະມານຂອງທ້ອງຖິ່ນຕົນ ທີ່ໄດ້ຮັບການພິຈາລະນາແລ້ວ ໃຫ້ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ.

**ມາດຕາ 33 . ການສ້າງແຜນ ແລະ ເປົ້າໝາຍການນຳໃຊ້ເງິນແຮລັດຖະບານ ແລະ ທ້ອງຖິ່ນ**

ເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ ຕາມທີ່ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງການສ້າງແຜນ ແລະ ເປົ້າໝາຍການນຳໃຊ້ເງິນແຮດັ່ງກ່າວ ຕ້ອງປະຕິບັດດັ່ງນີ້ :

1. ການສ້າງແຜນງົບປະມານປະຈຳປີ ຂອງງົບປະມານສູນກາງ ແລະງົບປະມານທ້ອງຖິ່ນ ຕ້ອງໄດ້ລວມເອົາເງິນແຮ ລະຫວ່າງ 3 ຫາ 5 ສ່ວນຮ້ອຍ ຂອງແຜນລາຍຈ່າຍທັງໝົດປະຈຳປີ.
2. ເປົ້າໝາຍການນຳໃຊ້ເງິນແຮດັ່ງກ່າວ ແມ່ນເພື່ອວຽກງານປ້ອງກັນ ແລະຕ້ານໄພທຳມະຊາດ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ພະຍາດລະບາດ ແລະວຽກງານຮີບດ່ວນ ທີ່ບໍ່ສາມາດຄາດຄະເນໄດ້ໃນຕະຫລອດ ສົກປີ ງົບປະມານ ;

**ມາດຕາ 34 . ການສ້າງແຜນ ແລະ ເປົ້າໝາຍການນຳໃຊ້ຄັງສະສົມແຫ່ງລັດ**

ຄັງສະສົມການເງິນແຫ່ງລັດ ຕາມທີ່ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງການສ້າງແຜນ ແລະ ເປົ້າໝາຍການນຳໃຊ້ຄັງສະສົມແຫ່ງລັດ ຕ້ອງປະຕິບັດດັ່ງນີ້ :

1. ການສ້າງແຜນງົບປະມານປະຈຳປີຂອງງົບປະມານ ຕ້ອງໄດ້ລວມເອົາຄັງສະສົມແຫ່ງລັດ ລະຫວ່າງ 2 ຫາ 3 ສ່ວນຮ້ອຍ ຂອງແຜນລາຍຈ່າຍງົບປະມານທັງໝົດປະຈຳປີ.
2. ເປົ້າໝາຍການນຳໃຊ້ຄັງສະສົມ ດັ່ງກ່າວ ແມ່ນເພື່ອນຳໃຊ້ເຂົ້າໃນການແກ້ໄຂວຽກງານສຳຄັນ, ຮີບດ່ວນລະດັບຊາດ ເຊັ່ນ: ວິກິດການທາງ ດ້ານການເງິນ ;

ໃນກໍລະນີທີ່ຈໍາເປັນຮີບດ່ວນ ນາຍົກລັດຖະມົນຕີ ຫລື ຜູ້ໄດ້ຮັບມອບສິດຈາກນາຍົກລັດຖະມົນຕີ ມີສິດສັ່ງຈ່າຍ ແຕ່ຕ້ອງໄດ້ລາຍງານໃຫ້ຄະນະປະຈໍາສະພາແຫ່ງຊາດ ເປັນແຕ່ລະງວດ ເພື່ອລາຍງານຕໍ່ກອງປະຊຸມສະພາແຫ່ງຊາດສະໄໝສາມັນໃນວາລະຖັດໄປ.

**ມາດຕາ 35 . ການສ້າງແຜນງົບປະມານລາຍຮັບຄ່າບໍລິການທາງດ້ານວິຊາການ ແລະ ກອງທຶນຂອງລັດ**

ຫົວໜ່ວຍງົບປະມານ ຂອງອົງການບໍລິຫານວິຊາການ ແລະກອງທຶນຂອງລັດ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 8, 9 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງການສ້າງແຜນງົບປະມານ ດັ່ງນີ້ :

1. ຫົວໜ່ວຍງົບປະມານທຸກຂັ້ນທີ່ມີລາຍຮັບຄ່າບໍລິການທາງດ້ານວິຊາການ ຕ້ອງສ້າງແຜນລາຍຮັບຄ່າບໍລິການທາງດ້ານວິຊາການຕາມລະບຽບກົດໝາຍ ແລະໃຫ້ສັງລວມເຂົ້າໃນແຜນງົບປະມານປະຈໍາປີ ໃນຂັ້ນທີ່ຕົນຮັບຜິດຊອບ. ບໍ່ອະນຸຍາດໃຫ້ຫົວໜ່ວຍງົບປະມານທຸກຂັ້ນທີ່ມີລາຍຮັບຄ່າບໍລິການທາງດ້ານວິຊາການ ເກັບຮັກສາລາຍຮັບດັ່ງກ່າວໄວ້ຢູ່ນອກລະບົບບັນຊີງົບປະມານ ເພື່ອນໍາໄປໃຊ້ຈ່າຍເພີ່ມນອກແຜນງົບປະມານ ທີ່ໄດ້ຮັບຮອງຈາກສະພາແຫ່ງຊາດ; ບໍ່ອະນຸຍາດໃຫ້ເອົາລາຍຮັບດັ່ງກ່າວ ໄປຈົດຮັບ- ຈົດຈ່າຍໂດຍກົງ.
2. ບັນດາກອງທຶນຂອງລັດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຖືກຕ້ອງຕາມລະບຽບກົດໝາຍ ຕ້ອງສ້າງແຜນລາຍຮັບ-ລາຍຈ່າຍຂອງຕົນ ຕາມຂອບເຂດສິດ ແລະຄວາມຮັບຜິດຊອບ ທີ່ໄດ້ກໍານົດໄວ້ໃນດໍາລັດວ່າດ້ວຍການສ້າງຕັ້ງກອງທຶນດັ່ງກ່າວ. ທຸກໆລາຍຮັບ-ລາຍຈ່າຍ ຂອງກອງທຶນຂອງລັດ ຕ້ອງສັງລວມເຂົ້າໃນແຜນງົບປະມານປະຈໍາປີ ເພື່ອນໍາສະເໜີກອງປະຊຸມສະພາແຫ່ງຊາດຮັບຮອງ ໃນແຕ່ລະປີ.
3. ຂັ້ນຕອນການສ້າງແຜນງົບປະມານ, ພິຈາລະນາ ແລະຮັບຮອງຂອງຫົວໜ່ວຍງົບປະມານອົງການບໍລິຫານວິຊາການ ແລະບັນດາກອງທຶນຂອງລັດ ຕ້ອງປະຕິບັດຕາມ ເນື້ອໃນທີ່ໄດ້ກໍານົດໄວ້ໃນ ມາດຕາ 31 ແລະ ມາດຕາ 32 ຂອງດໍາລັດສະບັບນີ້.

**ມາດຕາ 36 . ການປຶກສາຫາລືແຜນງົບປະມານແຫ່ງລັດ**

ການປຶກສາຫາລືແຜນງົບປະມານແຫ່ງລັດ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 48 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະຕິບັດ ດັ່ງນີ້ :

1. ພາຍຫລັງທີ່ກະຊວງການເງິນໄດ້ສັງລວມຮ່າງແຜນງົບປະມານ ຂອງບັນດາຫົວໜ່ວຍງົບປະມານທຸກຂັ້ນ, ຮ່າງແຜນງົບປະມານດັ່ງກ່າວ ແລ້ວຕ້ອງນໍາມາປຶກສາຫາລື.
2. ກະຊວງການເງິນ ຕ້ອງໄດ້ແຕ່ງຕັ້ງຄະນະກໍາມະການ ຮ່າງແຜນງົບປະມານ ຊຶ່ງປະກອບດ້ວຍພາກສ່ວນຕົ້ນຕໍຈໍານວນໜຶ່ງ ເປັນຕົ້ນ ແມ່ນກົມວິຊາການກ່ຽວຂ້ອງຂອງກະຊວງການເງິນ, ກະຊວງແຜນການແລະການລົງທຶນ ແລະອົງການກ່ຽວຂ້ອງອື່ນໆ. ຄະນະດັ່ງກ່າວມີໜ້າທີ່ຄົ້ນຄ້ວາ, ວິໄຈຄວາມອາດສາມາດ ທາງດ້ານລາຍຮັບ - ລາຍຈ່າຍ ງົບປະມານແຫ່ງລັດທົ່ວປະເທດ ໂດຍປຶກສາ

ຫາລື ແລະລົງເລິກເປັນແຕ່ລະຂະແໜງການ ລວມທັງສູນກາງ ແລະທ້ອງຖິ່ນ ຕາມຕາຕະລາງເວລາທີ່ໄດ້ກຳນົດ;

3. ພາຍຫລັງທີ່ ຄະນະກຳມະການຮ່າງແຜນງົບປະມານ ໄດ້ປຶກສາຫາລືກັບແຕ່ລະຂະແໜງການ ລວມທັງສູນກາງ ແລະທ້ອງຖິ່ນແລ້ວ ຕ້ອງຈັດຕັ້ງການປຶກສາຫາລືຮ່າງແຜນງົບປະມານ ໃນລະດັບລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ, ເຈົ້າແຂວງ ແລະເຈົ້າຄອງນະຄອນ ໂດຍການເປັນປະທານຂອງ ນາຍົກລັດຖະມົນຕີ ເພື່ອຄົ້ນຄ້ວາ, ໃຫ້ທິດຊີ້ນຳ ແລະຕົກລົງ ກ່ຽວກັບຕົວເລກມະຫາພາກ, ຍອດລາຍຮັບ-ລາຍຈ່າຍ, ການຂາດດຸນງົບປະມານ, ແຫລ່ງທຶນດຸ່ນດ່ຽງງົບປະມານ, ແຜນງານ ແລະ ໂຄງການ.

## ມາດຕາ 37 . ຂັ້ນຕອນພິຈາລະນາ ຮັບຮອງແຜນງົບປະມານແຫ່ງລັດ

ການພິຈາລະນາ ຮັບຮອງແຜນງົບປະມານແຫ່ງລັດ ທີ່ລະບຸໄວ້ໃນ ມາດຕາ 52 ຂອງກົດໝາຍງົບປະມານແຫ່ງລັດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຜນງົບປະມານແຫ່ງລັດທີ່ໄດ້ຜ່ານການປຶກສາຫາລື ຈະຖືກນຳເຂົ້າສູ່ກອງປະຊຸມຄະນະລັດຖະບານ ເພື່ອກວດກາຄືນຄວາມເປັນເອກະພາບ ໃຫ້ສອດຄ່ອງກັບຄຳສັ່ງແນະນຳກ່ຽວກັບການສ້າງແຜນງົບປະມານແຫ່ງລັດ ຢູ່ໃນໄລຍະຕົ້ນຂອງຂະບວນການສ້າງແຜນງົບປະມານ;
2. ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ໃນເດືອນມິຖຸນາ ຫລື ກໍລະກົດ ພິຈາລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ປະຈຳສົກປີ ທີ່ລັດຖະບານນຳສະເໜີ;
3. ໃນກໍລະນີທີ່ແຜນງົບປະມານແຫ່ງລັດ ບໍ່ໄດ້ຖືກຮັບຮອງຈາກສະພາແຫ່ງຊາດໃນວາລະກອງປະຊຸມສະໄໝສາມັນ, ລັດຖະບານ ຕ້ອງໄດ້ປັບປຸງຄືນຮ່າງແຜນງົບປະມານແຫ່ງລັດ ຕາມມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ ເພື່ອນຳສະເໜີຄືນຕໍ່ກອງປະຊຸມຂອງສະພາແຫ່ງຊາດ ຕາມວັນເວລາທີ່ໄດ້ກຳນົດໃຫ້.

## ມາດຕາ 38 . ການມອບແຜນງົບປະມານແຫ່ງລັດ

ການມອບແຜນງົບປະມານແຫ່ງລັດ ທີ່ລະບຸໄວ້ໃນມາດຕາ 53 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແມ່ນໃຫ້ຫົວໜ່ວຍງົບປະມານທຸກຂັ້ນ ຕ້ອງແຍກໃຫ້ເປັນລາຍລະອຽດ ຕາມສາລະບານງົບປະມານ. ການມອບແຜນງົບປະມານທຸກຂັ້ນ ຕ້ອງໃຫ້ສຳເລັດກ່ອນວັນທີ 30 ກັນຍາ ຂອງງົບປະມານປີຜ່ານມາທີ່ກຳລັງຈະສິ້ນສຸດລົງ.

## ມາດຕາ 39 . ການດັດແກ້ແຜນງົບປະມານແຫ່ງລັດ

ການດັດແກ້ແຜນງົບປະມານແຫ່ງລັດປະຈຳສົກປີ ທີ່ລະບຸໄວ້ໃນ ມາດຕາ 54 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແມ່ນສາມາດປະຕິບັດໄດ້ໜຶ່ງເທື່ອຕໍ່ປີ ຄື:

1. ພາຍຫລັງຈັດຕັ້ງປະຕິບັດແຜນງົບປະມານໃນຫົກເດືອນຕົ້ນປີແລ້ວ, ໃນກໍລະນີມີການປ່ຽນແປງນະໂຍບາຍ ຫລື ມີເຫດການໃດໜຶ່ງເກີດຂຶ້ນ ທີ່ບໍ່ໄດ້ຄາດຄະເນໄວ້ກ່ອນ ຊຶ່ງເປັນຜົນກະທົບ ຢ່າງຫລວງຫລາຍຕໍ່ການຈັດຕັ້ງປະຕິບັດແຜນລາຍຮັບ ແລະແຜນລາຍຈ່າຍງົບປະມານແຫ່ງລັດ ປະຈໍາສົກປີ ລັດຖະບານຕ້ອງດັດແກ້ແຜນງົບປະມານແຫ່ງລັດ ເພື່ອນໍາສະເໜີສະພາແຫ່ງຊາດ ພິຈາລະນາຮັບຮອງ ;
2. ໃນກໍລະນີ ມີຄວາມຕ້ອງການເພີ່ມລາຍຈ່າຍໃຫ້ແກ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຫລື ເພີ່ມລາຍຈ່າຍຂອງອົງການຈັດຕັ້ງໃດໜຶ່ງ ລວມທັງຂັ້ນສູນກາງ ແລະທ້ອງຖິ່ນ ຊຶ່ງການເພີ່ມລາຍຈ່າຍດັ່ງກ່າວ ບໍ່ສົ່ງຜົນກະທົບຢ່າງໃຫຍ່ຫລວງຕໍ່ແຜນງົບປະມານແຫ່ງລັດ, ລັດຖະບານໄດ້ຮັບການອະນຸຍາດໃຫ້ເພີ່ມລາຍຈ່າຍງົບປະມານໃຫ້ອົງການຈັດຕັ້ງດັ່ງກ່າວ ແຕ່ຕ້ອງໄດ້ກໍານົດແຫລ່ງທຶນໃຫ້ຄົບຖ້ວນ, ຊັດເຈນ ແລະນໍາເຂົ້າລາຍງານຕໍ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດໃນລາລະຕໍ່ໄປ;
3. ນາຍົກລັດຖະມົນຕີ ອອກດໍາລັດວ່າດ້ວຍການຈັດຕັ້ງປະຕິບັດແຜນດັດແກ້ງົບປະມານແຫ່ງລັດຂອງອົງການຈັດຕັ້ງຂອງລັດ ແລະອົງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະທ້ອງຖິ່ນ ເພື່ອເຮັດໃຫ້ແຜນດັດແກ້ມີຜົນໃຊ້ບັງຄັບໄດ້.

## ໝວດທີ IV
## ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ

### ມາດຕາ 40 . ການແບ່ງແຜນງົບປະມານແຫ່ງລັດ

ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຕາມທີ່ກໍານົດໄວ້ໃນໝວດທີ 3, ພາກທີ V ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແມ່ນນາຍົກລັດຖະມົນຕີ ມອບສິດໃຫ້ລັດຖະມົນຕີວ່າການກະຊວງການເງິນ ໃນຖານະເປັນຜູ້ສັ່ງການເອກ ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈໍາສົກປີ ໂດຍແບ່ງແຜນງົບປະມານແຫ່ງລັດ ອອກເປັນສີ່ງວດ ເພື່ອເຮັດໃຫ້ການປະຕິບັດມີຄວາມຄ່ອງຕົວ, ສອດຄ່ອງກັບຄວາມອາດສາມາດເກັບລາຍຮັບ ແລະແຈ້ງແຜນແບ່ງປັນງົບປະມານ ດັ່ງກ່າວໃຫ້ບັນດາຂະແໜງການ ຂັ້ນສູນກາງ ແລະທ້ອງຖິ່ນ ປະຕິບັດ.

### ມາດຕາ 41 . ການປະຕິບັດແຜນລາຍຈ່າຍງົບປະມານແຫ່ງລັດ

ການຈັດຕັ້ງປະຕິບັດແຜນລາຍຈ່າຍງົບປະມານແຫ່ງລັດ ທີ່ລະບຸໄວ້ໃນ ມາດຕາ 57 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະຕິບັດຕາມຫລັກ ການ, ຂັ້ນຕອນ ແລະ ເງື່ອນໄຂ ການຄຸ້ມຄອງລາຍຈ່າຍດັ່ງນີ້ :

1. ຫົວໜ່ວຍງົບປະມານທຸກຂັ້ນ ຕ້ອງຮັບຜິດຊອບໃນການກວດກາເອກະສານ ໃຫ້ຖືກຕ້ອງ, ຄົບຖ້ວນ ຕາມເນື້ອໃນລາຍຈ່າຍ ດັ່ງນີ້ :
   - ຕ້ອງຢູ່ໃນແຜນງົບປະມານປະຈຳສົກປີ ;
   - ຕ້ອງໄດ້ຮັບການອະນຸມັດ ;
   - ໃຫ້ຖືກຕ້ອງຕາມເປົ້າໝາຍລາຍຈ່າຍ ;
   - ຕ້ອງຄິດໄລ່ໃຫ້ຖືກຕ້ອງຕາມກຳນົດໝາຍການໃຊ້ຈ່າຍ ;
   - ຕ້ອງໄດ້ຮັບອະນຸຍາດຈາກຜູ້ສັ່ງການ ຫລື ຜູ້ຖືກມອບສິດ .

ພາຍຫລັງທີ່ໄດ້ກວດກາເອກະສານລາຍຈ່າຍ, ການເງິນຂອງຂະແໜງການ ຕ້ອງນຳສະເໜີ ຕໍ່ຜູ້ສັ່ງການອະນຸມັດສັ່ງຈ່າຍງົບປະມານຂອງຕົນ ເພື່ອສົ່ງໃຫ້ຄັງເງິນແຫ່ງຊາດ.

2. ຄັງເງິນແຫ່ງຊາດ ກວດຜ່ານເອກະສານລາຍຈ່າຍ ແລະປະຕິບັດການຊຳລະສະສາງລາຍຈ່າຍງົບປະມານຕາມຄຳສັ່ງຈ່າຍຂອງຜູ້ສັ່ງການ. ການຊຳລະສະສາງ ຕ້ອງຮັບປະກັນໃຫ້ຖືກຕ້ອງຕາມກຳນົດເວລາ, ເປີດເຜີຍ, ໂປ່ງໃສ ແລະສາມາດກວດສອບໄດ້.

### ມາດຕາ 42 . ການຈ່າຍລ່ວງໜ້າງົບປະມານ

ການຈ່າຍລ່ວງໜ້າງົບປະມານ ທີ່ລະບຸໄວ້ໃນ ມາດຕາ 57 ວັກ 2 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງໃນກໍລະນີທີ່ລັດຖະບານຍັງບໍ່ທັນໄດ້ມອບແຜນງົບປະມານປະຈຳສົກປີໃຫ້ບັນດາຂະແໜງການ ແລະທ້ອງຖິ່ນຈັດຕັ້ງປະຕິບັດນັ້ນ ຜູ້ສັ່ງການເອກ ອະນຸຍາດໃຫ້ເບີກຈ່າຍລ່ວງໜ້າໄດ້ເທົ່າກັບ 1/12 ຂອງຍອດລາຍຈ່າຍທີ່ປະຕິບັດໃນປີຜ່ານມາ ເພື່ອຈ່າຍເຂົ້າໃນເປົ້າໝາຍທີ່ຈຳເປັນ ດັ່ງນີ້ :

1. ລາຍຈ່າຍເງິນເດືອນ ແລະ ບາງຮ່ວງທີ່ກ່ຽວຂ້ອງເຖິງເງິນອຸດໜູນອື່ນໆ ;
2. ລາຍຈ່າຍໄປວຽກທາງການຢູ່ພາຍໃນ ແລະຕ່າງປະເທດ, ຈັດກອງປະຊຸມສຳມະນາ, ຝຶກອົບຮົມຕ່າງໆ, ຊື້ອຸປະກອນຮັບໃຊ້ການຮຽນ ການສອນ ຢູ່ໂຮງຮຽນສຶກສາສາມັນ, ວຽກງານປ້ອງກັນພະຍາດ;
3. ລາຍຈ່າຍງົບປະມານ ຊ່ວຍໜູນໃຫ້ທ້ອງຖິ່ນ ;
4. ໜີ້ສິນຕ່າງປະເທດຮອດກຳນົດເວລາ ;

ວົງເງິນລາຍຈ່າຍລ່ວງໜ້າດັ່ງກ່າວ ຕ້ອງມີຢູ່ໃນແຜນງົບປະມານ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ. ບັນດາຫົວໜ່ວຍງົບປະມານ ທີ່ນຳໃຊ້ເງິນລ່ວງໜ້າດັ່ງກ່າວຕ້ອງປະກອບເອກະສານ ໃຫ້ຄົບຖ້ວນ ແລະຖືກຕ້ອງ ເພື່ອໃຊ້ແທນຄືນ ແລະປິດບັນຊີຢູ່ຄັງເງິນແຫ່ງຊາດ ໃຫ້ສຳເລັດພາຍໃນ 90 ວັນ ຂອງງົບປະມານສົກປີນັ້ນ.

### ມາດຕາ 43 . ການຄຸ້ມຄອງການກູ້ຢືມເງິນພາຍໃນປະເທດ

ການກູ້ຢືມເງິນພາຍໃນປະເທດ ຕາມທີ່ລະບຸໄວ້ໃນ ມາດຕາ 63 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ໃຫ້ປະຕິບັດ ດັ່ງນີ້ :

- ກະຊວງການເງິນ ໄດ້ຮັບມອບສິດຈາກລັດຖະບານ ເປັນຜູ້ກູ້ຢືມເງິນພາຍໃນປະເທດ ດ້ວຍຮູບການລະດົມທຶນ ເຊັ່ນ: ການຂາຍພັນທະບັດ, ຂາຍໃບຮຸ້ນກູ້, ໃບຢັ້ງຢືນຮັບຮູ້ໜີ້ ເພື່ອດຸນດ່ຽງງົບປະມານ ໂດຍໃຫ້ນຳໃຊ້ສະເພາະລາຍຈ່າຍລົງທຶນ ເພື່ອການພັດທະນາເທົ່ານັ້ນ.

- ກະຊວງການເງິນເປັນຜູ້ສ້າງແຜນກູ້ຢືມເງິນພາຍໃນປະເທດ ໂດຍອີງໃສ່ຄວາມອາດສາມາດການໃຊ້ແທນຄືນ ຕົ້ນທຶນ ແລະດອກເບ້ຍ, ຄວາມອາດສາມາດໃຫ້ຜົນຕອບແທນທີ່ມີປະສິດທິຜົນຂອງໂຄງການລົງທຶນພັດທະນາ ແລະບໍ່ໃຫ້ມີຜົນກະທົບຕໍ່ລະດັບການຂາດດຸນຂອງງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດໄດ້ຮັບຮອງ.

- ກະຊວງການເງິນຕ້ອງລວມສູນແຫລ່ງເງິນກູ້ຢືມພາຍໃນປະເທດ ເຂົ້າໃນແຜນງົບປະມານແຫ່ງລັດປະຈຳປີ, ແຜນງົບປະມານແຫ່ງລັດໄລຍະກາງ, ບໍ່ອະນຸຍາດໃຫ້ທ້ອງຖິ່ນຂັ້ນຕ່າງໆ ກູ້ຢືມເງິນພາຍໃນປະເທດເພື່ອມາດຸນດ່ຽງງົບປະມານຂອງຕົນ.

**ມາດຕາ 44 . ການຄຸ້ມຄອງການຊຳລະໜີ້ສິນພາຍໃນປະເທດ**

ໜີ້ສິນພາຍໃນປະເທດ ຕາມທີ່ລະບຸໄວ້ໃນ ມາດຕາ 63 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແມ່ນພັນທະຕາມຂໍ້ຜູກພັນສັນຍາ ແລະລາຍຈ່າຍງົບປະມານທີ່ຄ້າງຊຳລະ ຊຶ່ງເກີດຂຶ້ນໃນແຜນງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດຮັບຮອງ ແລະປະກອບ ດ້ວຍໜີ້ລາຍຈ່າຍບໍລິຫານ, ໜີ້ລົງທຶນ, ໜີ້ຕົ້ນທຶນ, ດອກເບ້ຍພັນທະບັດ ແລະເອກະສານຮັບຮູ້ໜີ້ອື່ນໆ ຂອງລັດຖະບານ.

ກະຊວງການເງິນ ເປັນຜູ້ຮັບຜິດຊອບສັງລວມໜີ້ທັງໝົດ ໂດຍປະສານສົມທົບກັບຄະນະກຳມະການແຜນການ ແລະການລົງທຶນ ເພື່ອກຳນົດແຫລ່ງທຶນທີ່ຈະມາຊຳລະໜີ້ດັ່ງກ່າວ ຢ່າງຊັດເຈນ ແລະຈັດສັນເຂົ້າໃນແຜນງົບປະມານໄລຍະກາງ ແລະ ງົບປະມານປະຈຳສົກປີ.

ທົ່ວໜ່ວຍງົບປະມານທຸກຂັ້ນ ຕ້ອງສັງລວມໜີ້ທີ່ຕ້ອງຊຳລະເຂົ້າໃນແຜນງົບປະມານປະຈຳສົກປີ ໂດຍແຍກໃຫ້ເຫັນໜີ້ທີ່ສູນກາງຮັບຜິດຊອບ, ໜີ້ທີ່ທ້ອງຖິ່ນຮັບຜິດຊອບ ແລະໜີ້ທີ່ບັນດາຂະແໜງການເປັນຜູ້ສ້າງຂຶ້ນ.

ການຊຳລະໜີ້ພາຍໃນປະເທດ ລວມທັງສູນກາງ ແລະທ້ອງຖິ່ນ ຕ້ອງປະຕິບັດຜ່ານລະບົບຄັງເງິນແຫ່ງຊາດ ຕາມລະບຽບການຊຳລະສະສາງງົບປະມານທີ່ໄດ້ກຳນົດໄວ້.

**ມາດຕາ 45 . ການຄຸ້ມຄອງການກູ້ຢືມເງິນຈາກຕ່າງປະເທດ**

ການກູ້ຢືມເງິນຈາກຕ່າງປະເທດ ຕາມທີ່ລະບຸໄວ້ໃນ ມາດຕາ 63 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ໃຫ້ປະຕິບັດ ດັ່ງນີ້ :

- ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ສ້າງແຜນແມ່ບົດເພື່ອກຳນົດຍຸດທະສາດ, ນະໂຍບາຍການກູ້ຢືມເງິນຈາກຕ່າງປະເທດໃນໄລຍະກາງ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານໄລຍະກາງ ເພື່ອນຳສະເໜີລັດຖະບານພິຈາລະນາຮັບຮອງເອົາ.

- ກະຊວງການເງິນເປັນຜູ້ສ້າງແຜນກູ້ຢືມເງິນຈາກຕ່າງປະເທດ ສຳລັບໂຄງການລົງທຶນພັດທະນາຂອງລັດ ແລະດຸນດ່ຽງການຂາດດຸນຂອງງົບປະມານແຫ່ງລັດ, ຄຸ້ມຄອງ, ກວດກາ ແລະຕິດຕາມການກູ້ຢືມເງິນຈາກຕ່າງປະເທດ ຂອງບັນດາລັດວິສາຫະກິດ ໂດຍອີງໃສ່ເງື່ອນໄຂຂອງການກູ້ຢືມ, ຄວາມອາດສາມາດການໃຊ້ແທນຄືນຕົ້ນທຶນ ແລະດອກເບ້ຍ, ລວມທັງປະສິດທິຜົນ ແລະຜົນຕອບແທນຂອງໂຄງການ.

### ມາດຕາ 46 . ການຄຸ້ມຄອງການຊຳລະໜີ້ສິນຕ່າງປະເທດ

ໜີ້ສິນຕ່າງປະເທດ ຕາມທີ່ລະບຸໄວ້ໃນ ມາດຕາ 62 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງໃຫ້ມີການຄຸ້ມຄອງການຊຳລະໜີ້ ດັ່ງນີ້ :

- ກະຊວງການເງິນ ຄຸ້ມຄອງໃນການປັບໂຄງສ້າງໜີ້ສິນຕ່າງປະເທດຄືນໃໝ່ ດ້ວຍຮູບການເຈລະຈາກັບເຈົ້າໜີ້, ຍືດເວລາຊຳລະ, ການຜ່ອນຜັນການຊຳລະໜີ້ສິນ ແລະການສະເໜີທັນໜີ້ສິນມາເປັນການຊ່ວຍເຫລືອລ້າ.

ກະຊວງການເງິນ ຮັບຜິດຊອບຂຶ້ນແຜນຊຳລະໜີ້ສິນຕ່າງປະເທດ ລວມທັງຕົ້ນທຶນ ແລະດອກເບ້ຍ ຕາມກຳນົດເວລາທີ່ລະບຸໄວ້ໃນສັນຍາ ຢ່າງເຂັ້ມງວດ.

ການຊຳລະໜີ້ສິນຕ່າງປະເທດ ຈະປະຕິບັດຜ່ານລະບົບຄັງເງິນແຫ່ງຊາດ ຕາມລະບຽບການຊຳລະສະສາງງົບປະມານທີ່ໄດ້ກຳນົດໄວ້.

### ມາດຕາ 47 . ການຄຸ້ມຄອງເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນ

ເງິນແຮລັດຖະບານ ແລະເງິນແຮທ້ອງຖິ່ນ ຕາມທີ່ລະບຸໄວ້ໃນ ມາດຕາ 10 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງຄຸ້ມຄອງ ດັ່ງນີ້:

1. ນາຍົກລັດຖະມົນຕີ ຫລື ຜູ້ໄດ້ຮັບມອບສິດຈາກນາຍົກລັດຖະມົນຕີ ເປັນຜູ້ຕົກລົງສັ່ງຈ່າຍເງິນແຮລັດຖະບານ. ເຈົ້າແຂວງ ແລະ ເຈົ້າຄອງນະຄອນ ເປັນຜູ້ຕົກລົງສັ່ງຈ່າຍເງິນແຮທ້ອງຖິ່ນຂອງຕົນ;
2. ຂະແໜງການທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ ແລະທ້ອງຖິ່ນ ທີ່ເປັນຜູ້ຮັບຜິດຊອບໂດຍກົງ ຕໍ່ກໍລະນີເຫດການສຸກເສີນ, ຮີບດ່ວນ ຕ້ອງສະເໜີແຜນງົບປະມານລະອຽດໃຫ້ນາຍົກລັດຖະມົນຕີ ເພື່ອແກ້ໄຂບັນຫາດັ່ງກ່າວ ໃນກໍລະນີທີ່ມີການນຳໃຊ້ເງິນແຮຂອງລັດຖະບານ ແລະສະເໜີໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນ ພິຈາລະນາແກ້ໄຂໃນກໍລະນີນຳໃຊ້ເງິນແຮຂອງທ້ອງຖິ່ນ;
3. ກະຊວງການເງິນ ມີຄວາມຮັບຜິດຊອບສະຫລຸບສັງລວມ, ລາຍງານການຈັດຕັ້ງປະຕິບັດຕົວເລກຍອດເຫລືອເງິນແຮລັດຖະບານ. ເຈົ້າແຂວງ, ເຈົ້າຄອງນະຄອນຫລວງ ມີຄວາມຮັບຜິດຊອບສະຫລຸບສັງລວມ, ລາຍງານການຈັດຕັ້ງປະຕິບັດຕົວເລກຍອດເຫລືອເງິນແຮທ້ອງຖິ່ນໃຫ້ນາຍົກລັດຖະມົນຕີເປັນແຕ່ລະໄລຍະ;
4. ຍອດເຫລືອຂອງເງິນແຮລັດຖະບານ ແລະ ເງິນແຮທ້ອງຖິ່ນໃນສົກປີງົບປະມານ ຕ້ອງມອບເຂົ້າຄັງສະສົມແຫ່ງລັດ.

**ມາດຕາ 48 . ການຄຸ້ມຄອງຄັງສະສົມແຫ່ງລັດ**

ຄັງສະສົມແຫ່ງລັດ ຕາມທີ່ລະບຸໄວ້ໃນ ມາດຕາ 11 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແມ່ນນາຍົກລັດຖະມົນຕີມອບສິດໃຫ້ລັດຖະມົນຕີວ່າການກະຊວງການເງິນ ເປັນຜູ້ຖືບັນຊີເງິນຝາກຄັງສະສົມແຫ່ງລັດທີ່ເປີດໄວ້ຢູ່ທະນາຄານແຫ່ງ ສປປ ລາວ. ສິດສັ່ງຈ່າຍເງິນຄັງສະສົມແຫ່ງລັດໃນບັນຊີດັ່ງກ່າວ ແມ່ນນາຍົກລັດຖະມົນຕີເປັນຜູ້ຕົກລົງ.

- ຄັງສະສົມແຫ່ງລັດທີ່ເປີດບັນຊີໄວ້ຢູ່ທະນາຄານ ຕ້ອງໄດ້ຮັບດອກເບ້ຍ ຕາມລະບຽບການຂອງທະນາຄານ ແລະ ຈຳນວນເງິນດອກເບ້ຍດັ່ງກ່າວ ຕ້ອງສະສົມເຂົ້າເປັນລາຍຮັບ ເພີ່ມເຂົ້າໃນບັນຊີເງິນຝາກ;
- ຜູ້ສັ່ງການເອກຕ້ອງໂອນເງິນຈາກແຜນງົບປະມານບ້ວງຄັງສະສົມແຫ່ງລັດ ທີ່ໄດ້ຜ່ານການຮັບຮອງຈາກສະພາແຫ່ງຊາດປະຈຳແຕ່ລະສົກປີ ເຂົ້າບັນຊີເງິນຝາກຄັງສະສົມແຫ່ງລັດເປັນແຕ່ລະງວດພາຍໃນສົກປີງົບປະມານ;
- ຜູ້ສັ່ງການເອກ ມີຄວາມຮັບຜິດຊອບສະຫລຸບສັງລວມ, ລາຍງານການເຄື່ອນໄຫວບັນຊີເງິນ ຝາກ ແລະ ຕົວເລກຍອດເຫລືອຄັງສະສົມແຫ່ງລັດ ໃຫ້ນາຍົກລັດຖະມົນຕີເປັນແຕ່ລະໄລຍະ.

**ມາດຕາ 49 . ການຄຸ້ມຄອງລາຍຮັບຄ່າບໍລິການ ທາງດ້ານວິຊາການ**

ລາຍຮັບຄ່າບໍລິການທາງດ້ານວິຊາການ ຕາມທີ່ລະບຸໄວ້ໃນ ມາດຕາ 9 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງຄຸ້ມຄອງ ດັ່ງນີ້:

- ຫົວໜ່ວຍງົບປະມານທຸກຂັ້ນ ທີ່ມີລາຍຮັບຄ່າບໍລິການທາງດ້ານວິຊາການ ຫລື ຖືກມອບໝາຍຈາກລັດຖະບານໃຫ້ເກັບ ຕ້ອງຖືບັນຊີລະອຽດ ຕາມກົດໝາຍການບັນຊີ ແລະ ເປີດບັນຊີເງິນຝາກຢູ່ຄັງເງິນແຫ່ງຊາດ. ບໍ່ອະນຸຍາດໃຫ້ຫົວໜ່ວຍງົບປະມານທຸກຂັ້ນ ທີ່ມີລາຍຮັບຄ່າບໍລິການ ທາງດ້ານວິຊາການ ເປີດບັນຊີເງິນຝາກ ສະເພາະນອກລະບົບຄັງເງິນແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ສັ່ງການເອກ.

- ຫົວໜ່ວຍງົບປະມານທີ່ມີລາຍຮັບຄ່າບໍລິການ ທາງດ້ານວິຊາການຕ້ອງໄດ້ສ້າງແຜນລາຍຮັບງົບປະມານປະຈຳປີ ຂອງຕົນ ຕາມຂັ້ນຕອນ ແລະ ລະບຽບການ ທີ່ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 50 . ການຄຸ້ມຄອງລາຍຈ່າຍອົງການບໍລິຫານວິຊາການ**

ລາຍຈ່າຍຂອງອົງການບໍລິຫານວິຊາການ ຕາມທີ່ລະບຸໄວ້ໃນ ມາດຕາ 9 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງຄຸ້ມຄອງ ດັ່ງນີ້:

- ຫົວໜ່ວຍງົບປະມານວິຊາການ ຕ້ອງເປີດບັນຊີ ຢູ່ຄັງເງິນແຫ່ງຊາດ ເພື່ອຄຸ້ມຄອງ ແລະ ຕິດຕາມລາຍຈ່າຍຕ່າງໆ ໃຫ້ຖືກຕ້ອງຕາມສາລະບານງົບປະມານ ແລະ ແຜນງົບປະມານປະຈຳປີ.

- ລາຍຈ່າຍບໍລິຫານປົກກະຕິທີ່ຮັບໃຊ້ໃຫ້ຫົວໜ່ວຍງົບປະມານທຸກຂັ້ນ ຕ້ອງຂຶ້ນແຜນລາຍຈ່າຍງົບປະມານລະອຽດ ໂດຍປະຕິບັດຕາມຂັ້ນຕອນ ແລະລະບຽບການ ຂອງການສ້າງແຜນງົບປະມານແຫ່ງລັດ ທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງດຳລັດສະບັບນີ້. ຜູ້ສັ່ງການເອກ ມອບສິດໃຫ້ຜູ້ສັ່ງການ ອະນຸມັດລາຍ

ຈ່າຍຂອງຫົວໜ່ວຍງົບປະມານທີ່ມີລາຍຮັບຄ່າບໍລິການທາງດ້ານວິຊາການ ແຕ່ຕ້ອງບໍ່ໃຫ້ເກີນແຜນທີ່ໄດ້ຮັບຮອງແລ້ວ.

- ຫົວໜ່ວຍງົບປະມານທຸກຂັ້ນ ທີ່ມີລາຍຮັບຄ່າບໍລິການ ທາງດ້ານວິຊາການ ຫລື ຖືກມອບໝາຍຈາກລັດຖະບານ ໃຫ້ເກັບລາຍຮັບຄ່າບໍລິການ ທາງດ້ານວິຊາການ ຕ້ອງເຮັດບົດລາຍງານການຈັດຕັ້ງປະຕິບັດລາຍຮັບ, ລາຍຈ່າຍ ຂອງຕົນ ຢູ່ຄັງເງິນແຫ່ງຊາດ ເປັນແຕ່ລະເດືອນ.

- ໃນກໍລະນີທີ່ລາຍຮັບຄ່າບໍລິການ ທາງດ້ານວິຊາການ ຫາກປະຕິບັດໄດ້ລື່ນແຜນການ ແມ່ນມອບໃຫ້ຂະແໜງການ ກ່ຽວຂ້ອງນຳໃຊ້ໄດ້ທັງໝົດ.

**ມາດຕາ 51 . ການຄຸ້ມຄອງລາຍຮັບ ແລະ ລາຍຈ່າຍກອງທຶນຂອງລັດ**

ລາຍຮັບ ແລະ ລາຍຈ່າຍ ກອງທຶນຂອງລັດ ຕາມທີ່ລະບຸໄວ້ໃນ ມາດຕາ 8 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງຄຸ້ມຄອງ ດັ່ງນີ້:

- ລາຍຮັບຂອງບັນດາກອງທຶນຂອງລັດ ທີ່ໄດ້ກຳນົດໄວ້ໃນດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການສ້າງຕັ້ງກອງທຶນ ຕ້ອງມອບເຂົ້າໃນບັນຊີເງິນຝາກຂອງຕົນຢູ່ຄັງເງິນແຫ່ງຊາດເປັນແຕ່ລະເດືອນ ບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ ໂດຍແຍກເປັນແຕ່ລະປະເພດລາຍຮັບ ຕາມສາລະບານງົບປະມານ. ບັນດາລາຍຮັບ ແລະ ລາຍຈ່າຍກອງທຶນຂອງລັດ ຕ້ອງຖືກຄິດໄລ່ເຂົ້າຢູ່ໃນແຜນງົບປະມານປະຈຳສົກປີ ແລະ ຕ້ອງຢູ່ພາຍໃຕ້ການຕິດຕາມ ແລະ ຄຸ້ມຄອງທາງດ້ານບັນຊີຂອງຄັງເງິນແຫ່ງຊາດ;

- ລາຍຈ່າຍຂອງບັນດາກອງທຶນຂອງລັດ ຕ້ອງປະຕິບັດຕາມລະບຽບການ ແລະ ຂັ້ນຕອນການເບີກຈ່າຍງົບປະມານແຫ່ງລັດ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ V
## ການປິດບັນຊີ ແລະ ສະຫລຸບຂາດຕົວງົບປະມານແຫ່ງລັດ

**ມາດຕາ 52 . ການປິດບັນຊີຂອງຫົວໜ່ວຍງົບປະມານ**

**ການປິດບັນຊີຂອງຫົວໜ່ວຍງົບປະມານ** ທີ່ກຳນົດໄວ້ໃນມາດຕາ 66 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ **ໃຫ້ປະຕິບັດ ດັ່ງນີ້:**

1. ຫົວໜ່ວຍງົບປະມານທຸກຂັ້ນ ຕ້ອງປິດສະຫລຸບບັນຊີ ລາຍຮັບ ແລະ ລາຍຈ່າຍງົບປະມານຂອງຕົນຢ່າງເປັນປະຈຳ ແຕ່ລະວັນ, ເດືອນ, ງວດ, ປີ ແລ້ວລາຍງານການປະຕິບັດແຜນງົບປະມານໃຫ້ແກ່ການຈັດຕັ້ງຂັ້ນເທິງຂອງຕົນຊາບ;
2. ຄັງເງິນແຫ່ງຊາດແຕ່ລະຂັ້ນ ຕ້ອງດຳເນີນການໄລ່ລຽງບັນຊີ ແລະ ປິດສະຫລຸບບັນຊີລາຍຮັບ ແລະ ລາຍຈ່າຍງົບປະມານ ເປັນປະຈຳວັນ, ເດືອນ, ງວດ, ປີ ແລະ ລາຍງານການປະຕິບັດແຜນງົບປະມານ ຕາມສາຍຕັ້ງຂອງຕົນ ແລະ ຂະແໜງການເງິນຂັ້ນຂອງຕົນຮັບຊາບ;

3. ຄັງເງິນແຫ່ງຊາດ ເປັນເຈົ້າການປະສານສົມທົບກັບອົງການເກັບລາຍຮັບ ໃນການສົມທຽບຕົວ ເລກລະຫວ່າງລາຍຮັບຢູ່ໃນແຜນການ ກັບຕົວເລກທີ່ປະຕິບັດໄດ້ຕົວຈິງ;
4. ທົວໜ່ວຍງົບປະມານ ແລະ ຄັງເງິນແຫ່ງຊາດ ທຸກຂັ້ນ ຕ້ອງປະສານສົມທົບກັນ ເພື່ອສົມທຽບຕົວເລກລາຍຈ່າຍຢູ່ໃນແຜນການ ກັບຕົວເລກລາຍຈ່າຍທີ່ໄດ້ປະຕິບັດຕົວຈິງ;
5. ທົວໜ່ວຍງົບປະມານທຸກຂັ້ນ ລວມທັງອົງການຈັດຕັ້ງສະມາຄົມຕ່າງໆ, ທົວໜ່ວຍບໍລິຫານວິຊາການ ແລະ ກອງທຶນຂອງລັດ ທີ່ນຳໃຊ້ງົບປະມານ ຕ້ອງລາຍງານ ແລະ ສະໜອງເອກະສານທີ່ຈຳເປັນ ໃຫ້ອົງການທີ່ກ່ຽວຂ້ອງຂອງລັດ ກ່ຽວກັບການປະຕິບັດແຜນງົບປະມານຂອງຕົນ.

## ມາດຕາ 53 . ການຊຳລະສະສາງງົບປະມານແຫ່ງລັດ ພາຍຫລັງປິດບັນຊີງົບປະມານ

ການຊຳລະສະສາງງົບປະມານແຫ່ງລັດ ພາຍຫລັງປິດບັນຊີງົບປະມານ ຕາມທີ່ລະບຸໄວ້ໃນ ມາດຕາ 68 ຂີດໜ້າ 2 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຄັງເງິນແຫ່ງຊາດ ຕ້ອງປະຕິບັດ ດັ່ງນີ້:

1. ບັນດາເອກະສານລາຍຈ່າຍ ທີ່ໄດ້ຮັບການອະນຸມັດ ແລະ ກວດກາແລ້ວ ຄັງເງິນແຫ່ງຊາດຕ້ອງໄດ້ຊຳລະສະສາງໃຫ້ສຳເລັດ ພາຍໃນກຳນົດເວລາ 90 ວັນ;
2. ແຫລ່ງເງິນຊຳລະສະສາງລາຍຈ່າຍງົບປະມານ ແມ່ນເອົາມາຈາກຍອດເຫລືອງົບປະມານໃນສົກປີນັ້ນ.

## ມາດຕາ 54 . ການປິດສະຫລຸບຂາດຕົວງົບປະມານແຫ່ງລັດ

ການປິດສະຫລຸບຂາດຕົວງົບປະມານແຫ່ງລັດ ແມ່ນກຳນົດເອົາວັນທີ 31 ທັນວາ ຕາມທີ່ລະບຸໄວ້ໃນ ມາດຕາ 70 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະຕິບັດ ດັ່ງນີ້:

1. ທົວໜ່ວຍງົບປະມານທຸກຂັ້ນ ເປັນເຈົ້າການປະສານສົມທົບກັບຄັງເງິນແຫ່ງຊາດ ເພື່ອສົມທຽບຕົວເລກລາຍຮັບ ແລະລາຍຈ່າຍງົບປະມານຢູ່ຂັ້ນຂອງຕົນ ທີ່ໄດ້ປະຕິບັດຕົວຈິງ ແລະໄດ້ລົງບັນຊີຜ່ານລະບົບຄັງເງິນແຫ່ງຊາດເປັນທີ່ຮຽບຮ້ອຍແລ້ວ;
2. ຄັງເງິນແຫ່ງຊາດ ຕ້ອງຮັບຜິດຊອບຕໍ່ຕົວເລກສະຫລຸບຂາດຕົວງົບປະມານແຫ່ງລັດ ໃຫ້ຖືກຕ້ອງ, ຊັດເຈນ, ຄົບຖ້ວນ, ຕາມແບບຮ່າງລາຍງານງົບປະມານ ແລະ ສາລະບານງົບປະມານ;
3. ພາຍຫລັງປິດບັນຊີຂາດຕົວງົບປະມານ ຖ້າມີຍອດເຫລືອງົບປະມານຢູ່ໃນບັນຊີຄັງເງິນແຫ່ງຊາດ ໃຫ້ທັກເຂົ້າຄັງສະສົມແຫ່ງລັດ ຫ້າສິບສ່ວນຮ້ອຍ (50%) ແລະອີກຫ້າສິບສ່ວນຮ້ອຍ (50%) ໃຫ້ຍົກໄປສົກງົບປະມານໃນປີຖັດໄປ ເພື່ອເພີ່ມເປັນລາຍຈ່າຍທີ່ຈຳເປັນຂອງລັດຖະບານ ໂດຍແມ່ນນາຍົກລັດຖະມົນຕີເປັນຜູ້ຕົກລົງ ສັ່ງຈ່າຍຮ່ວງລາຍຈ່າຍເພີ່ມດັ່ງກ່າວໄດ້ ແຕ່ຕ້ອງໄດ້ລາຍງານຄືນໃຫ້ຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 55 . ກຳນົດເວລາສົ່ງບົດສະຫລຸບຂາດຕົວຂອງບັນດາຫົວໜ່ວຍງົບປະມານອ້ອມຂ້າງ ສູນກາງ**

ບັນດາຫົວໜ່ວຍງົບປະມານອ້ອມຂ້າງສູນກາງ ຕ້ອງສົ່ງບົດສະຫລຸບຂາດຕົວງົບປະມານຂອງຕົນ ຕາມກຳນົດເວລາ ຕາມທີ່ລະບຸໄວ້ໃນ ມາດຕາ 70 ແລະ 71 ຂໍ້ 1 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ດັ່ງນີ້:

1. ຫົວໜ່ວຍງົບປະມານຂັ້ນສອງ ຕ້ອງສົ່ງບົດລາຍງານສະຫລຸບຂາດຕົວງົບປະມານຂອງຕົນ ໃຫ້ຫົວໜ່ວຍງົບປະມານຂັ້ນໜຶ່ງ ບໍ່ໃຫ້ກາຍວັນທີ 31 ທັນວາ;
2. ຫົວໜ່ວຍງົບປະມານຂັ້ນໜຶ່ງ ຕ້ອງສົ່ງບົດລາຍງານສະຫລຸບຂາດຕົວງົບປະມານຂອງຕົນ ໂດຍຜ່ານການຮັບຮອງຈາກຜູ້ສັ່ງການໃຫ້ກະຊວງການເງິນ ບໍ່ໃຫ້ກາຍວັນທີ 30 ມັງກອນ ປີຖັດໄປ.

**ມາດຕາ 56 . ກຳນົດເວລາສົ່ງບົດສະຫລຸບຂາດຕົວຂອງບັນດາຫົວໜ່ວຍງົບປະມານທ້ອງຖິ່ນ**

ບັນດາຫົວໜ່ວຍງົບປະມານທ້ອງຖິ່ນຕ້ອງສົ່ງບົດສະຫລຸບຂາດຕົວງົບປະມານຂອງຕົນ ຕາມກຳນົດເວລາ ທີ່ລະບຸໄວ້ໃນ ມາດຕາ 70 ແລະ 71 ຂໍ້ 1 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ດັ່ງນີ້:

1. ຫົວໜ່ວຍງົບປະມານຂັ້ນສອງຂອງທ້ອງຖິ່ນ ຕ້ອງສົ່ງບົດລາຍງານສະຫລຸບຂາດຕົວງົບປະມານ ຂອງຕົນ ໃຫ້ຫົວໜ່ວຍງົບປະມານຂັ້ນໜຶ່ງຂອງທ້ອງຖິ່ນ ບໍ່ໃຫ້ກາຍວັນທີ 31 ທັນວາ;
2. ຫົວໜ່ວຍງົບປະມານຂັ້ນໜຶ່ງຂອງທ້ອງຖິ່ນ ຕ້ອງສົ່ງບົດລາຍງານສະຫລຸບຂາດຕົວງົບປະມານຂອງຕົນ ໃຫ້ພະແນກການເງິນແຂວງ, ນະຄອນຫລວງ ໂດຍຜ່ານການຮັບຮອງຈາກຜູ້ສັ່ງການ ບໍ່ໃຫ້ກາຍວັນທີ 30 ມັງກອນ ປີຖັດໄປ;
3. ພະແນກການເງິນແຂວງ, ນະຄອນຫລວງ ຕ້ອງສົ່ງບົດສະຫລຸບຂາດຕົວງົບປະມານທັງໝົດ ໃຫ້ກະຊວງການເງິນ ບໍ່ໃຫ້ກາຍ ວັນທີ 28 ກຸມພາ ປີຖັດໄປ.

**ມາດຕາ 57 . ກຳນົດເວລາສົ່ງບົດສະຫລຸບຂາດຕົວງົບປະມານແຫ່ງລັດໃຫ້ອົງການກວດສອບແຫ່ງລັດ ແລະ ສະພາແຫ່ງຊາດ**

ການກຳນົດເວລາສົ່ງບົດສະຫລຸບຂາດຕົວງົບປະມານແຫ່ງລັດ ຕາມທີ່ລະບຸໄວ້ໃນ ມາດຕາ 71 ຂໍ້ 2 ແລະ 3 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະຕິບັດດັ່ງຕໍ່ໄປນີ້ :

1. ກະຊວງການເງິນ ຕ້ອງສັງລວມ ແລະ ກວດກາ ຄວາມຖືກຕ້ອງຂອງບົດສະຫລຸບຂາດຕົວງົບປະມານແຫ່ງລັດ ເພື່ອສົ່ງໃຫ້ອົງການກວດສອບແຫ່ງລັດຢັ້ງຢືນບໍ່ໃຫ້ກາຍ ວັນທີ 30 ມີນາ;
2. ອົງການກວດສອບແຫ່ງລັດຕ້ອງກວດສອບ ແລະ ຢັ້ງຢືນຄວາມຖືກຕ້ອງ ເພື່ອນຳສົ່ງໃຫ້ລັດຖະບານ ແລະ ຄະນະປະຈຳສະພາແຫ່ງຊາດ ບໍ່ໃຫ້ກາຍ ວັນທີ 31 ພຶດສະພາ;
3. ລັດຖະບານຕ້ອງສົ່ງບົດສະຫລຸບຂາດຕົວງົບປະມານແຫ່ງລັດ ທີ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ຈາກອົງການກວດສອບແຫ່ງລັດໃຫ້ສະພາແຫ່ງຊາດ ຢ່າງເປັນທາງການ 15 ວັນ ກ່ອນການເປີດກອງປະຊຸມສະພາແຫ່ງຊາດ.

## ໝວດທີ VI
## ການກວດກາ, ກວດການ ແລະ ຍ້ອງຍໍຕໍ່ຜູ້ມີຜົນງານ

**ມາດຕາ 58 . ການກວດກາ, ກວດການ**

ການກວດກາ, ກວດການ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 83, 84 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແມ່ນບັນດາກະຊວງ, ອົງການທຽບເທົ່າ ອ້ອມຂ້າງສູນກາງ, ອົງການປົກຄອງທ້ອງຖິ່ນມີຄວາມຮັບຜິດຊອບໃນການກວດກາການປະຕິບັດລາຍຮັບ, ລາຍຈ່າຍ ແລະຄຸ້ມຄອງງົບປະມານ, ຄຸ້ມຄອງຊັບສິນຂອງລັດ ໃນຂອບເຂດທີ່ຕົນຮັບຜິດຊອບ ແລະແນະນຳ ບັນດາຫົວໜ່ວຍງົບປະມານຂັ້ນເທິງດຳເນີນການກວດກາພາຍໃນຕໍ່ຫົວໜ່ວຍງົບປະມານຂັ້ນລຸ່ມ ທີ່ຂຶ້ນກັບ ຕົນ.

**ມາດຕາ 59 . ສິດ ແລະ ໜ້າທີ່ ຕົ້ນຕໍຂອງເຈົ້າໜ້າທີ່ກວດກາການເງິນ**

ສິດ ແລະໜ້າທີ່ຕົ້ນຕໍຂອງເຈົ້າໜ້າທີ່ກວດກາການເງິນ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 81, 82 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ຕ້ອງປະຕິບັດ ດັ່ງນີ້:

1. ມີໜ້າທີ່ກວດກາ ການປະຕິບັດລາຍຮັບ, ລາຍຈ່າຍ ແລະຄຸ້ມຄອງງົບປະມານ, ຄຸ້ມຄອງຊັບສິນຂອງບັນດາອົງການຈັດຕັ້ງ ແລະສ່ວນບຸກຄົນ ຕາມລະບຽບກົດໝາຍ;
2. ເມື່ອປະຕິບັດໜ້າທີ່ ມີສິດດັ່ງລຸ່ມນີ້:
   - ຮຽກຮ້ອງໃຫ້ອົງການຈັດຕັ້ງ ຫລື ບຸກຄົນທີ່ຖືກກວດກາສະໜອງເອກະສານທີ່ຈຳເປັນ ແລະຄົບຖ້ວນ;
   - ຮຽກຮ້ອງໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງໃຫ້ການຮ່ວມມືໃນການກວດກາ;.
   - ອົງການກວດສອບພາຍໃນ ຕ້ອງຮັບຜິດຊອບແກ້ໄຂຕາມລະບຽບກົດໝາຍ ໂດຍອີງຕາມລັກສະນະ ແລະ ປະເພດຂອງຄວາມຜິດ ຫລື ສະເໜີໃຫ້ອົງການຈັດຕັ້ງທີ່ມີສິດ, ອຳນາດ ໃນການພິຈາລະນາແກ້ໄຂ;
3. ຕ້ອງມີຄວາມຮັບຜິດຊອບຕໍ່ບົດສະຫລຸບກວດກາຂອງຕົນ;
4. ຂອບເຂດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງເຈົ້າໜ້າທີ່ກວດກາການເງິນ ໃຫ້ປະຕິບັດ ຕາມດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 160/ນຍ, ລົງວັນທີ 26 ສິງຫາ 1996.

**ມາດຕາ 60 . ການຍ້ອງຍໍໃຫ້ລາງວັນຕໍ່ຜູ້ທີ່ມີຜົນງານ**

ອົງການຈັດຕັ້ງ ຂັ້ນສູນກາງ, ທ້ອງຖິ່ນ ແລະບຸກຄົນ ທີ່ມີຜົນງານ ຕາມທີ່ລະບຸໄວ້ໃນມາດຕາ 85 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ເກັບລາຍຮັບ ຢ່າງຖືກຕ້ອງຕາມລະບຽບກົດໝາຍ, ໄດ້ລື່ນແຜນການ ທີ່ສະພາແຫ່ງຊາດຮັບຮອງ ແລະປະຕິບັດລາຍຈ່າຍງົບປະມານຢ່າງປະຢັດ ແລະກໍ່ຍັງຮັບປະກັນຜົນຂອງການປະຕິບັດວຽກງານຢ່າງມີຄຸນນະພາບ; ການນຳຂອງອົງການປົກຄອງທ້ອງຖິ່ນ ທີ່ສາມາດ

ຫລຸດຜ່ອນການຊ່ວຍໜູນງົບປະມານຈາກສູນກາງລົງເທື່ອລະກ້າວ ຫລື ເພີ່ມອັດຕາສ່ວນມອບລາຍຮັບເຂົ້າງົບປະມານສູນກາງ ຈະໄດ້ຮັບການຍ້ອງຍໍໃຫ້ລາງວັນ ຕາມການຄົ້ນຄ້ວາພິຈາລະນາ ໃນແຕ່ລະກໍລະນີ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 61 . ການຈັດຕັ້ງປະຕິບັດ**

ກະຊວງການເງິນ ແລະທຸກພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ຕັ້ງປະຕິບັດດຳລັດສະບັບນີ້ ຕາມໜ້າທີ່ ຂອງຕົນຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະ ນະຄອນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້.

**ມາດຕາ 62 . ຜົນສັກສິດ**

ດຳລັດສະບັບນີ້ ປ່ຽນແທນດຳລັດເລກທີ 192 /ນຍ, ລົງວັນທີ 2/11/1999. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ດຳລັດສະບັບນີ້ ມີຜົນສັກສິດໃຊ້ບັງຄັບນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ